ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
Lao National Chamber of Commerce and Industry

# ແຜນຍຸດທະສາດການພັດທະນາ ພາກທຸລະກິດ ໃນ ສປປ ລາວ ສຳລັບຊຸມ ປີ 2021-2025



"ເສີມສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ ແລະ ມີທັດສະນະແຂ່ງຂັນສູງ ນຳໂດຍພາກທຸລະກິດ
ທີ່ເຂັ້ມແຂງທີ່ປະກອບສ່ວນຢ່າງຫຼວງຫຼາຍ ຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ ແບບຍືນຍົງ"

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ(ສຄອຊ)
ນະຄອນຫຼວງວຽງຈັນ, ເດືອນພະຈິກ 2020

# ແຜນຍຸດທະສາດການພັດທະນາພາກທຸລະກິດໃນ ສປປ ລາວ ສຳລັບຊຸມປີ 2021 - 2025

**“ເສີມສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ ແລະ ມີທັດສະນະແຂ່ງຂັນສູງ ນຳໂດຍພາກທຸລະກິດທີ່ເຂັ້ມແຂງທີ່ປະກອບສ່ວນຢ່າງຫຼວງຫຼາຍ ຕໍ່ການຂະຫຍາຍຕົວຂອງ ເສດຖະກິດຂອງ ສປປ ລາວ ແບບຍືນຍົງ”**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ)

ນະຄອນຫຼວງວຽງຈັນ, ເດືອນພະຈິກ 2020

# ສາລະບານ

## ເນື້ອໃນ

ສາລະບານ ........ 2
ສາລະບານຮູບພາບ ........ 4
ບົດແນະນຳ ........ 6
ຄຳເຫັນຂອງປະທານ ສຄອຊ ........ 7
ບົດສັງລວມໂດຍຫຍໍ້ ........ 9
1. ຄຳນຳ ........ 12
1.1. ວັດຖຸປະສົງ ........ 12
1.2. ວິທີການໃນການຮ່າງແຜນຍຸດທະສາດ ........ 12
2. ແວດລ້ອມຍຸດທະສາດ ແລະ ການເຄື່ອນໄຫວວຽກງານຂອງ ສຄອຊ ........ 13
2.1. ສະພາບດ້ານເສດຖະກິດ ........ 13
2.1.1. ສະພາບການພັດທະນາເສດຖະກິດປະຈຸບັນ ........ 13
2.1.2. ສະພາບແວດລ້ອມການດຳເນີນທຸລະກິດ ........ 16
2.1.3. ສະພາບການລົງທຶນທຸລະກິດ ........ 18
2.1.4. ສະພາບການຄ້າຕ່າງປະເທດ ........ 19
2.1.5. ຈູນລະວິສະຫະກິດ, ວິສາຫະກິດຂະໜາດນ້ອຍ ຂະໜາດກາງ ........ 22
2.2. ຜົນກະທົບຈາກ COVID-19 ........ 23
2.2.1 ຜົນການສຳຫຼວດຜົນກະທົບຂອງ COVID-19 ຕໍ່ທຸລະກິດ ຂອງ ສຄອຊ ........ 25
2.3. ແວດລ້ອມຍຸດທະສາດຂອງ ສຄອຊ ........ 27
2.3.1. ບົດບາດ, ໜ້າທີ່ ແລະ ວຽກງານຫຼັກຂອງ ສຄອຊ ........ 27
2.3.2. ການວິເຄາະທ່າແຮງ, ຈຸດອ່ອນ, ກາລະໂອກາດ ແລະ ໄພຂົ່ມຂູ່ (SWOT) ........ 30
2.3.2.1. ທ່າແຮງ ........ 30
2.3.2.2. ຈຸດອ່ອນ ........ 30
2.3.2.3. ກາລະໂອກາດ ........ 31
2.3.2.4. ໄພຂົ່ມຂູ່ ........ 32
2.3.3. ການສືບທອດຈາກຍຸດທະສາດການພັດທະນາພາກທຸລະກິດລາວ ສຳລັບປີ 2018-2020 ຂອງ ສຄອຊ ........ 33

2.3.4. ຄວາມຄາດຫວັງຈາກພາຍນອກຕໍ່ບູລິມະສິດການພັດທະນາເສດຖະກິດ ..... 36
2.3.4.1. ບັນດາເປົ້າໝາຍຂອງແຜນພັດທະນາເສດຖະກິດສັງຄົມຄັ້ງທີ່ 9 ປີ 2021-2025 ..... 36
2.3.4.2. ບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ..... 37
3. ແຜນຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ ສໍາລັບ 2021 – 2025 ..... 38
3.1. ລາຍລະອຽດຂອງແຜນຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ ສໍາລັບປີ 2021– 2025 ..... 41
3.1.1. ເສົາຄໍ້າ I: ການພົບປະພາກລັດ-ທຸລະກິດເພື່ອສ້າງແວດລ້ອມທຸລະກິດໃຫ້ດີຂຶ້ນ ..... 41
3.1.2. ເສົາຄໍ້າ II: ການຊຸກຍູ້ຊ່ວຍເຫຼືອ SME ແລະ ສູນບໍລິການ SME ..... 44
3.1.3. ເສົາຄໍ້າ III: ການສົ່ງເສີມຜະລິດຕະພັນລາວ ແລະ ການຕະຫຼາດ ..... 48
3.1.4. ເສົາຄໍ້າ IV: ການເຊື່ອມໂຍງພາກພື້ນ ແລະ ການສົ່ງເສີມການລົງທຶນທີ່ຍືນຍົງ ..... 51
3.1.5. ເສົາຄໍ້າ V: ການພັດທະນາຜູ້ປະກອບການທຸລະກິດ ແລະ ກິດຈະກໍາຕາງໜ້າຜູ້ໃຊ້ແຮງງານ ..... 54
3.1.6. ເສົາຄໍ້າ VI: ຂໍ້ມູນຂ່າວສານ, ການປະຊາສໍາພັນ ແລະ ພັດທະນາສະມາຊິກ ..... 56
4. ການຈັດຕັ້ງໃໝ່ຂອງ ສຄອຊ ..... 59
4.1. ຄະນະບໍລິຫານງານ ..... 59
4.2. ຄະນະປະຈໍາ ..... 59
4.3. ຄະນະທີ່ປຶກສາຂອງ ສຄອຊ ..... 59
5. ການປັບປຸງບຸກຄະລາກອນໃຫ້ແທດເໝາະກັບແຜນຍຸດທະສາດໃໝ່ ..... 61
ເອກະສານຄັດຕິດ: ຕາຕະລາງເວລາສໍາລັບການດໍາເນີນແຜນຍຸດທະສາດ ..... 65
ເອກະສານອ້າງອີງ ..... 127

# ສາລະບານຮູບພາບ


ຮູບພາບ 1: ການແຈກຢາຍຂອງວິສາຫະກິດໃນແຕ່ລະເຂດ....................................................................14
ຮູບພາບ 2: ການຈັດອັນດັບການອຳນວຍຄວາມສະດວກດ້ານທຸລະກິດ ສຳລັບປະເທດໃນອາຊຽນໃນດັດສະນີໃນ ປີ 2020 ແລະ ໃນດັດສະນີການແຂ່ງຂັນລະດັບໂລກໃນປີ 2019 ....................................................................17
ຮູບພາບ 3: ສະຖິຕິການສົ່ງອອກສິນຄ້າຂອງ ສປປ ລາວ-ພັນລ້ານໂດລາ ....................................................20
ຮູບພາບ 4: ຄູ່ຮ່ວມການຄ້າ ແລະ ຜະລິດຕະພັນສົ່ງອອກຂອງ ສປປ ລາວ ໃນປີ 2019....................................21
ຮູບພາບ 5: ຄວາມສ່ຽງໃນການປິດກິດຈະການທຸລະກິດໃນແຕ່ລະຂະແໜງການ ............................................25
ຮູບພາບ 6: ເປີເຊັນຂອງຜູ້ປະກອບການທຸລະກິດທີ່ຈະຢຸດຕິການຈ້າງງານ ....................................................26
ຮູບພາບ 7: ສັງລວມການວິເຄາະທ່າແຮງ, ຈຸດອ່ອນ, ກາລະໂອກາດ ແລະ ໄພຂົ່ມຂູ່ (SWOT Analysis)..............33
ຮູບພາບ 8: ບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ກ່ຽວຂ້ອງກັບ ສຄອຊ ...............................37
ຮູບພາບ 9: ເສົາຄ້ຳຍຸດທະສາດຂອງ ສຄອຊ ສຳຫຼັບ 2021-2025 ........................................................40
ຮູບພາບ 10: ໂຄງຮ່າງການຈັດຕັ້ງໃຫມ່ຂອງ ສຄອຊ.......................................................................60
ຮູບພາບ 11: ລຳດັບຊັ້ນຂອງພະນັກງານ.......................................................................................62
ຮູບພາບ 12: ການປະກອບບຸກຄະລາກອນໃນໂຄງປະກອບການຈັດຕັ້ງໃໝ່ ...............................................63

**“ຍຸດທະສາດ ເປັນການສືບຕໍ່ທິດທາງເດີມໃຫ້ໄປຕາມສະພາບການປ່ຽນແປງທີ່ຕໍ່ເນື່ອງ”**

*Helmuth K. B. von Moltke*

# ບົດແນະນຳ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1989 ແລະ ໄດ້ເຄື່ອນໄຫວເປັນອົງກອນ ທີ່ໄດ້ຮັບການອະນຸມັດສ້າງຕັ້ງໂດຍລັດຖະບານທີ່ເຄື່ອນໄຫວເປັນເອກະລາດຕາມດຳລັດ ເລກທີ 237/ນຍ ລົງວັນທີ 18 ພຶດສະພາ 2020.

ສຄອຊ ເປັນອົງການຈັດຕັ້ງຂອງນັກທຸລະກິດທີ່ໃຫຍ່ສຸດ ທີ່ເປັນຕາງໜ້າໃຫ້ແກ່ທຸລະກິດຂອງລັດ, ເອກະຊົນລາວ, ຂອງຕ່າງປະເທດທີ່ໄດ້ຈົດທະບຽນໃນ ສປປ ລາວ.

ຍຸດທະສາດສະບັບນີ້ໄດ້ຖືກຮ່າງໂດຍທ່ານ ຣາມົນ ບຣູເຊເລີ (Ramon Bruesseler), ໂດຍການຊ່ວຍເຫຼືອຈາກປະທານ, ຮອງປະທານ, ຄະນະປະຈຳ, ເລຂາທິການ, ຮອງເລຂາທິການຂອງ ສຄອຊ ຊຸດທີ 7 ໂດຍການຊ່ວຍເຫຼືອດ້ານທຶນຮອນຈາກໂຄງການ RELATED ຂອງ GIZ ປະເທດເຢຍລະມັນ. ວຽກງານຂຽນຮ່າງຍຸດທະສາດໄດ້ປະຕິບັດຜ່ານການສຳພາດ, ການປຶກສາຫາລື ແລະ ກອງປະຊຸມຕ່າງໆກັບພາກສ່ວນທີ່ກ່ຽວຂ້ອງທາງພາກລັດ ແລະ ພາກທຸລະກິດ.

ສອບຖາມກ່ຽວກັບວຽກງານນີ້, ກະລຸນາຕິດຕໍ່:


ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ,<br>
ຫ້ອງການ<br>
ຖະໜົນໄກສອນ ພົມວິຫານ, ບ້ານ ໂພນພະເນົາ<br>
ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ<br>
ຕູ້ ປ.ນ: 4596<br>
ໂທລະສັບ: (856-21) 453312-14 ຕໍ່ 118-119<br>
ໂທລະສານ: (856-21) 452580<br>
ອີເມວ: info@lncci.la


ສຄອຊ: "ເສີມສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ ແລະ ມີທັດສະນະແຂ່ງຂັນສູງນຳໂດຍພາກທຸລະກິດທີ່ເຂັ້ມແຂງ"

ຂໍ້ມູນທົ່ວໄປຂອງ ສຄອຊ ແມ່ນມີຢູ່ເວບໄຊ້ຂອງ ສຄອຊ: www.lncci.la/


ເນື້ອໃນຂອງເອກກະສານສະບັບນີ້ສາມາດເອົາໄປນຳໃຊ້ໄດ້ ຫຼື ພິມເພີ່ມເຕີມໄດ້ ຖ້າຫາກມີການອານຸຍາດເປັນທາງການຈາກຫ້ອງການບໍລິຫານຂອງ ສຄອຊ ທີ່ນະຄອນຫຼວງວຽງຈັນ. ສຳເນົາຂອງການຈັດພິມໃໝ່ສະບັບໜຶ່ງຈະຕ້ອງໄດ້ສົ່ງໃຫ້ຫ້ອງການບໍລິຫານເຊັ່ນດຽວກັນ.
ລິຂະສິດໃນການພິມເອກະສານສະບັບນີ້ເປັນຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) 2020. ສິດທິທຸກຢ່າງໃນເອກກະສານນີ້ໄດ້ຖືກສະຫງວນໄວ້.

# ຄຳເຫັນຂອງປະທານ ສຄອຊ

"ເສີມສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ ແລະ ມີທັດສະນະແຂ່ງຂັນສູງ ນຳໂດຍພາກທຸລະກິດທີ່ເຂັ້ມແຂງ ທີ່ປະກອບສ່ວນຢ່າງຫຼວງຫຼາຍຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງ ສປປລາວ ແບບຍືນຍົງ"

ໃນທຸກມື້ນີ້ພວກເຮົາໄດ້ປະເຊີນໜ້າກັບຜົນກະທົບຂອງການຫຼຸດຖອຍລົງຂອງເສດຖະກິດຂອງໂລກ ທີ່ນຳໄປເຖິງສົງຄາມການຄ້າລະຫວ່າງບັນດາປະເທດທີ່ນຳໜ້າທາງດ້ານເສດຖະກິດ, ພ້ອມກັນນັ້ນການປ່ຽນແປງສະພາບດິນຟ້າອາກາດໄດ້ເພີ້ມຈຳນວນ ອຸທົກກະໄພ ແລະ ໄພພິບັດທຳມະຊາດເຊັ່ນ: ໄພແຫ້ງແລ້ງທີ່ຮ້າຍແຮງ ນໍ້າຖ້ວມທີ່ຮ້າຍແຮງ ແລະ ການລະບາດພະຍາດ ແລະ ສັດຕູພືດ. ການລະບາດຂອງພະຍາດ COVID-19 ໄດ້ກະທົບຊີວິດການເປັນຢູ່ຂອງປະຊາຊົນໃນທົ່ວໂລກແຕ່ທ້າຍປີ 2019 ແລະ ໄດ້ເຮັດໃຫ້ສະພາບເສດຖະກິດດັ່ງກ່າວແມ່ນຖືກກະທົບໄປຕື່ມ. ປະຊາຄົມທຸລະກິດໃນ ສປປ ລາວ ແມ່ນປະເຊີນໜ້າກັບສິ່ງທ້າທາຍ ກາລະໂອກາດຫຼາຍປະການ ຈາກໄພຂົ່ມຂູ່ທີ່ກ່າວມານັ້ນ ແລະ ຈາກຄວາມຮຽກຮ້ອງຕ້ອງການໃນການຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ໃນການຮ່ວມມືກັບການຂະຫຍາຍຕົວຂອງລະບົບດິຊີຕານ, ນະວັດຕະກຳທາງດ້ານເຕັກໂນໂລຊີໃໝ່ ແລະ ຕົວແບບການດຳເນີນທຸລະກິດແບບໃໝ່. ສປປ  ລາວ ກະກຽມທີ່ຈະຫຼຸດອອກຈາກບັນຊີ ປະເທດດ້ອຍພັດທະນາໃນຊຸມປີທີ່ມາເຖິງນີ້, ໄດ້ເພີ້ມພາລະໃຫ້ພາກທຸລະກິດຂອງພວກເຮົາ ໄດ້ເພີ່ມທັດສະນະແຂ່ງຂັນຂອງຕົນເອງໃນຕະຫຼາດພາຍໃນ, ພາກພື້ນ ແລະ ໃນໂລກ. ອີກດ້ານໜຶ່ງ, ມັນຍັງມີຄວາມຈຳເປັນຢ່າງຍິ່ງໃຫ້ພາກທຸລະກິດໄດ້ເຮັດວຽກຢ່າງໃກ້ຊິດກັບພາກລັດຖະບານ ເພື່ອປັບປຸງແວດລ້ອມທຸລະກິດໃນ ສປປ ລາວໃຫ້ດີຂຶ້ນ.

ເພື່ອກະກຽມໃຫ້ແກ່ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 9 ສຳຫຼັບ 2021-2025 ຄະນະບໍລິຫານງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ໄດ້ຕົກລົງກະກຽມແຜນຍຸດທະສາດ 2021-2025 ສະບັບນີ້. ການຮ່າງແຜນຍຸດທະສາດແມ່ນໄດ້ສັງລວມຈາກການພົບປະກັບພາກສ່ວນທີ່ກ່ຽວຂ້ອງ, ລວມມີສະພາການຄ້າ ແລະ ອຸດສາຫະກຳແຂວງ (ສຄອຂ), ບັນດາສະມາຄົມທຸລະກິດ, ແລະ ຄະນະບໍລິຫານງານ ພ້ອມທັງພະນັກງານຂອງ ສຄອຊ ທີ່ໄດ້ຄົ້ນຄ້ວາອອກຄຳຄິດເຫັນຕໍ່ທິດທາງຍຸດທະສາດ ເພື່ອຄັດຈ້ອນ, ຈັດບູລິມະສິດ ແລະ ກຳນົດແນວຄວາມຄິດການພັດທະນາ. ຮ່າງທິດທາງຍຸດທະສາດ ແລະ ຮ່າງແຜນຍຸດທະສາດແມ່ນໄດ້ຜ່ານກອງປະຊຸມຫຼວງຄັ້ງທີ 8 ຂອງ ສຄອຊ ໃນເດືອນພະຈິກ 2020 ຜ່ານມານີ້. ຄະນະບໍລິຫານງານຊຸດໃໝ່ຂອງ ສຄອຊ ໄດ້ສະແດງຄວາມມຸ້ງໝັ້ນໃຫ້ວິໃສທັດ "ເສີມສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ ແລະ ມີທັດສະນະແຂ່ງຂັນສູງ ນຳໂດຍພາກທຸລະກິດທີ່ເຂັ້ມແຂງ ທີ່ປະກອບສ່ວນຢ່າງຫຼວງຫຼາຍຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ ແບບຍືນຍົງ" ໃຫ້ປະກົດຜົນເປັນຈິງ ແລະ ເຮັດໜ້າທີ່ໃນການເສີມສ້າງຄວາມເຂັ້ມແຂງຂອງພາກທຸລະກິດ ໂດຍການສະໜັບສະໜູນ ແລະ ການໃຫ້ບໍລິການໃຫ້ແກ່ພາກທຸລະກິດຂະໜາດນ້ອຍຂະໜາດກາງ (SME), ການພັດທະນາການຕະຫຼາດຜະລິດຕະພັນລາວ, ການເຊື່ອມໂຍງເສດຖະກິດສາກົນ ແລະ ການລົງທຶນທີ່ຍືນຍົງໃຫ້ໄດ້ມີຜົນສຳເລັດຢ່າງສະຫງ່າງາມ.

ໂດຍຕາງໜ້າໃຫ້ແກ່ຄະນະບໍລິຫານງານຂອງ ສຄອຊ ຊຸດທີ 8, ຂ້າພະເຈົ້າມີຄວາມພາກພູມໃຈສະເໜີຕໍ່ບັນດາທ່ານແຜນຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ ສຳລັບຊຸມປີ 2021-2025. ບັນດາເນື້ອໃນ ແລະ

ກິດຈະກໍາທີ່ໄດ້ກໍານົດຢູ່ໃນຍຸດທະສາດແຜນໃໝ່ສະບັບນີ້ ຈະບໍ່ພຽງແຕ່ເປັນທິດຊີ້ນໍາໃຫ້ແກ່ຄະນະບໍລິຫານງານ ຂອງ ສຄອຊ, ຄະນະທີ່ປຶກສາ, ສະພາການຄ້າ ແລະ ອຸດສາຫະກໍາແຂວງ ແລະ ນະຄອນຫຼວງ ພ້ອມທັງສະມາຄົມທຸລະກິດເທົ່ານັ້ນ. ຂ້າພະເຈົ້າຍັງເຊື່ອໝັ້ນວ່າ ຜູ້ນໍາ ແລະ ຜູ້ປະກອບການທຸລະກິດຈະໄດ້ນໍາໃຊ້ແຜນຍຸດທະສາດນີ້ເປັນບ່ອນອີງໃນການພັດທະນາ ແລະ ຂະຫຍາຍກິດຈະການ ແລະ ການບໍລິການຂອງເຂົາເຈົ້າ. ນອກຈາກນັ້ນ ຂ້າພະເຈົ້າປາດຖະໜາວ່າ ແຜນຍຸດທະສາດນີ້ຈະໄດ້ຮັບການສະໜັບສະໜູນຈາກລັດຖະບານແຫ່ງ ສປປ ລາວ ແລະ ອົງການພັດທະນາຕ່າງໆ.

ສຸດທ້າຍນີ້ ຂ້າພະເຈົ້າຂໍຂອບໃຈທຸກໆຄົນທີ່ໄດ້ປະກອບສ່ວນໃນການຮ່າງຫາກະກຽມແຜນຍຸດທະສາດນີ້. ຂ້າພະເຈົ້າຂໍຂອບໃຈອົງການພັດທະນາຂອງປະເທດເຢຍລະມັນ (GIZ) ທີ່ໄດ້ຊ່ວຍເຫຼືອປະກອບສ່ວນນັກຊ່ຽວຊານວິຊາການເພື່ອການຮ່າງຫາກະກຽມ.

ທ່ານ ອຸເດດ ສຸວັນນະວົງ

ປະທານ ສຄອຊ

# ບົດສັງລວມໂດຍຫຍໍ້

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ທີ່ມີຈຳນວນສະມາຊິກເກືອບ 1000 ຫົວໜ່ວຍເປັນອົງການຈັດຕັ້ງຂອງພາກທຸລະກິດທີ່ສຳຄັນກວ່າໝູ່ໃນ ສປປ ລາວ. ສະພານີ້ ນຳພາບັນດາສະພາການຄ້າ ແລະ ອຸດສາຫະກຳລະດັບແຂວງ-ນະຄອນຫຼວງ ແລະ ບັນດາອົງການຈັດຕັ້ງພາກທຸລະກິດ. ການຈັດຕັ້ງ, ພາລະບົດບາດ ແລະ ໜ້າທີ່ຂອງອົງການແມ່ນປົກຄອງໂດຍດຳລັດເລກທີ່ 237/ນຍ ລົງວັນທີ 18 ພຶດສະພາ 2020.

ເພື່ອປະຕິບັດໜ້າທີ່ຂອງຕົນ, ສຄອຊ ຈະໄດ້ຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາພາກທຸລະກິດ ສຳລັບປີ 2021-2025 ທີ່ອີງໃສ່ 6 ບູລິມະສິດ ທີ່ເປັນຍຸດທະສາດ (6 ເສົາຄ້ຳ) ດັ່ງລຸ່ມນີ້:

- ເສົາຄ້ຳ I: ການພົບປະລັດ-ທຸລະກິດ ເພື່ອສ້າງແວດລ້ອມທຸລະກິດໃຫ້ດີຂຶ້ນ;
- ເສົາຄ້ຳ II: ການຊຸກຍູ້ຊ່ວຍເຫຼືອ SME ແລະ ສູນບໍລິການ SME;
- ເສົາຄ້ຳ III: ການສົ່ງເສີມຜະລິດຕະພັນລາວ ແລະ ການຕະຫຼາດ;
- ເສົາຄ້ຳ IV: ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການລົງທຶນທີ່ຍືນຍົງ;
- ເສົາຄ້ຳ V: ການພັດທະນາການປະກອບການທຸລະກິດ ແລະ ກິດຈະກຳຜູ້ໃຊ້ແຮງງານ; ແລະ
- ເສົາຄ້ຳ VI: ການພັດທະນາຂໍ້ມູນຂ່າວສານ, ການປະຊາສຳພັນ ແລະ ສະມາຊິກ.

**ເສົາຄ້ຳ I :** ແມ່ນເນັ້ນໃສ່ການສະໜັບສະໜູນ ແລະ ການປັບປຸງແວດລ້ອມທຸລະກິດ ແລະ ການຈັດອັນດັບຂອງ ສປປ ລາວ ຕາມດັດສະນີວ່າດ້ວຍຄວາມສະດວກໃນການດຳເນີນທຸລະກິດຂອງທະນາຄານໂລກ. ເພື່ອຍົກລະດັບ ແລະ ປະສິດທິພາບຂອງການເປັນຕົວແທນປົກປັກຮັກສາຜົນປະໂຫຍດຂອງພາກທຸລະກິດທັງມວນ, ສຄອຊ ຈະປັບປຸງລະບົບວິທີເຮັດວຽກໃນເວທີທຸລະກິດລາວ (Lao Business Forum – LBF) ທີ່ເປັນເວທີຕົ້ນຕໍໃນການພົບປະພາກລັດ-ທຸລະກິດໃນ ສປປ ລາວ ພ້ອມທັງຈັດຕັ້ງປະຕິບັດເວທີພົບປະດັ່ງກ່າວໃນລະດັບແຂວງ ໂດຍ ສອຄແຂວງ ແລະ ໃນລະດັບສະມາຄົມທຸລະກິດຈຳນວນໜຶ່ງ. ຈະໄດ້ມີການສ້າງຕັ້ງກຸ່ມສ່ຽວຊານວິຊາການສະເພາະດ້ານເພື່ອປະກອບຄຳເຫັນ ແລະ ຕິດຕາມການປັບປຸງລະບຽບການທີ່ມີຢູ່ ແລະ ຈັດຕັ້ງປະຕິບັດການພົບປະແບບສ້າງສັນນຳອົງການຈັດຕັ້ງຂອງພາກລັດຖະບານທີ່ກ່ຽວຂ້ອງກັບບັນຫາຕ່າງໆຂອງພາກທຸລະກິດ ເພື່ອເຮັດແນວໃດໃຫ້ການຈັດອັນດັບການອຳນວຍຄວາມສະດວກໃຫ້ການດຳເນີນທຸລະກິດຢູ່ ສປປ ລາວ ແມ່ນຫຼຸດລົງເປັນ 2 ຕົວເລກ. ໃນເສົາຄ້ຳນີ້ ຈະໄດ້ສ້າງສູນໄກ່ເກ່ຍຂໍ້ຂັດແຍ່ງເສດຖະກິດນອກສານ ຮ່ວມກັບສະມາຄົມທະນາຍຄວາມລາວ.

**ເສົາຄ້ຳ II :** ເວົ້າເຖິງໜ້າທີ່ຕົ້ນຕໍໃນການສະໜອງການບໍລິການໃຫ້ແກ່ທຸລະກິດຂະໜາດນ້ອຍ ຂະໜາດກາງ (SME) ແລະ ການລິເລີ່ມທຸລະກິດ (Start-up) ແລະ ການເກັບກຳຂໍ້ມູນກ່ຽວກັບ SME. ເພື່ອເຮັດໄດ້ແນວນັ້ນ ສຄອຊ ຈະສ້າງຕັ້ງສູນບໍລິການ SME ໃນບັນດາແຂວງ ແລະ ໃນບັນດາສະມາຄົມທຸລະກິດທີ່ມີເງື່ອນໄຂ ຈະໄດ້ຈັດຕັ້ງໃຫ້ມີການບໍລິການໃຫ້ຜູ້ຕ້ອງການລິເລີ່ມທຸລະກິດ ແລະ ການບົ່ມເພາະທຸລະກິດໃໝ່ ແລະ ການສ້າງຕາຂ່າຍພີ່ລ້ຽງທຸລະກິດ (Mentorship) ຂຶ້ນເພື່ອໃຫ້ຄຳປຶກສາ, ພ້ອມທັງສ້າງບ່ອນເຮັດວຽກຮ່ວມຫຼາຍທຸລະກິດທີ່ສຳນັກງານຂອງສູນ SME ຂອງ ສຄອຊ. ຍິ່ງໄປກວ່ານັ້ນ, ເພື່ອໃຫ້ຄຳປຶກສາກ່ຽວກັບວິທີແກ້ໄຂ ແລະ ຟື້ນຟູທຸລະກິດຈາກ

ວິກິດການ COVID-19 ສຄອຊ ຈະໄດ້ຈັດຄລີນິກໃຫ້ຄໍາປຶກສາໃຫ້ແກ່ SME. ຄລີນິກດັ່ງກ່າວຈະເຕົ້າໂຮມເອົາບັນດາບໍລິສັດທີ່ປຶກສາທີ່ເປັນສະມາຊິກຂອງ ສຄອຊ ເພື່ອເປັນຖານວິຊາການເພື່ອໃຫ້ຄໍາປຶກສາ. ສູນບໍລິການ SME ຈະໄດ້ປະຕິບັດຖານຂໍ້ມູນການຄ້າຂອງອາຊຽນ (ASEAN SME Trade Portal), ສະໜອງການຝຶກອົບຮົມທີ່ບໍ່ກ່ຽວກັບອຸດສາຫະກໍາສະເພາະ ແຕ່ເປັນຮູບລັກສະນະທົ່ວໄປເຊັ່ນ: ດ້ານການຕະຫຼາດ, ການບໍລິຫານທຸລະກິດ, ການຄຸ້ມຄອງບຸກຄະລາກອນ ແລະ ອື່ນໆ; ແລະ ການຝຶກອົບຮົມສະເພາະເພື່ອຊ່ວຍ SME-MSME ເຂົ້າເຖິງແຫຼ່ງທຶນ. ເພື່ອໃຫ້ການບໍລິ ການຂອງສູນໄປຕາມຄວາມຮຽກຮ້ອງຕ້ອງການຂອງລູກຄ້າໃນແຕ່ລະອັນ ຈະໄດ້ສ້າງຖານຂໍ້ມູນຂ່າວສານ SME ຂຶ້ນ.

**ເສົາຄໍ້າ III :** ມີຈຸດປະສົງຍົກຄວາມສາມາດເພື່ອໃຫ້ຜະລິດຕະພັນລາວໄດ້ເຂົ້າເຖິງຕະຫຼາດໃໝ່ ແລະ ຕະຫຼາດທີ່ມີຢູ່ປັດຈຸບັນ. ສຄອຊ ໄດ້ສ້າງສູນບໍລິການສົ່ງເສີມຜະລິດຕະພັນລາວຢູ່ໃນສໍານັກງານຂອງຕົນແລ້ວ ແລະ ຈະຄັດເລືອກເອົາ 6 ຜະລິດຕະພັນດ້ານວັດຖຸ, ການບໍລິການ ທີ່ເປັນປາຍແຫຼມເພື່ອພັດທະນາສົ່ງເສີມ, ໂດຍການກໍານົດມາດຖານເພື່ອຮັບປະກັນຄຸນນະພາບຂອງຜະລິດຕະພັນ, ຊ່ວຍເຫຼືອໃຫ້ແກ່ຜູ້ຜະລິດ ແລະ ຕ່ອງໂສ້ການເຂົ້າເຖິງຕະຫຼາດຂອງຜະລິດຕະພັນນັ້ນ ໂດຍການຈັດຕັ້ງລະບົບປະຕິບັດວຽກງານການສ້າງຍີ່ຫໍ້, ການຕະຫຼາດ ແລະ ຂໍ້ມູນການຕະຫຼາດ. ຈະໄດ້ມີການພັດທະນາຮູບແບບຕ່ອງໂສ້ມູນຄ່າເພີ່ມການຜະລິດ ແລະ ຈໍານວນທີ່ຕ້ອງການໃຫ້ແຕ່ລະຜະລິດຕະພັນ ຕາມຄວາມຕ້ອງການຂອງຕະຫຼາດ. ພ້ອມທັງມີການຈັດການຝຶກອົບຮົມສະເພາະດ້ານໃຫ້ແກ່ຜູ້ປະກອບການທີ່ເຄື່ອນໄຫວໃນຕ່ອງໂສ້ມູນຄ່າເພີ່ມດັ່ງກ່າວເພື່ອຮັບປະກັນໃຫ້ໄດ້ຄຸນນະພາບ. ນອກນັ້ນ ຍັງຈະໄດ້ສົ່ງເສີມການເຂົ້າຫາຕະຫຼາດຂອງຜະລິດຕະພັນລາວອື່ນໆທີ່ມີຢູ່ ໂດຍການປັບປຸງງານວາງສະແດງຜະລິດຕະພັນລາວ (Made in Laos) ໃຫ້ເປັນງານແບບມືອາຊີບ ໂດຍມີການກະກຽມ ແລະ ຝຶກອົບຮົມບັນດາຜູ້ປະກອບການ ສະເໜີ ແລະ ຈັດວາງຜະລິດຕະພັນຂອງຕົນໃນງານຕະຫຼາດນັດຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. ອີກດ້ານໜຶ່ງ, ສຄອຊ ຈະສົ່ງເສີມ ແລະ ສືບຕໍ່ພັດທະນາທຸລະກິດດີຊິຕານທີ່ຍັງຫຼ້າຫຼັງໃນ ສປປ ລາວ ໂດຍການພັດທະນາການຄ້າຂາຍຜ່ານສື່ອອນລາຍຄື: ຖານ Plaosme, ສຄອຊ ຈະສືບຕໍ່ໃນການຢັ້ງຢືນແຫຼ່ງກໍາເນີດສິນຄ້າ ແລະ ຈະຊ່ວຍໃຫ້ບັນດາຜະລິດຕະພັນທີ່ເປັນແຊມປ້ຽນໄດ້ເຂົ້າຮ່ວມຢັ້ງຢືນມາດຕະຖານຄຸນນະພາບສູງ ດ້ານຈັນຍາບັນທີ່ຕະຫຼາດຮຽກຮ້ອງຕ້ອງການ.

**ເສົາຄໍ້າ IV :** ແມ່ນຈະສົ່ງເສີມການເຊື່ອມໂຍງເສດຖະກິດພາກພື້ນ ໂດຍສະເພາະແມ່ນກັບກຸ່ມປະເທດອາຊຽນ, ອາຊຽນບວກ, ກຸ່ມປະເທດລຸ່ມແມ່ນໍ້າຂອງ (GMS) ແລະ ໃນກອບຂອງການຮ່ວມມືຕ່າງໆ ໂດຍການສ້າງຕັ້ງຄະນະຮັບຜິດຊອບແຕ່ລະວຽກງານທີ່ກ່ຽວພັນກັບການຄ້າ ແລະ ການລົງທຶນ, ເພື່ອເກັບກໍາເອົາຂໍ້ມູນກ່ຽວກັບສິ່ງກີດຂວາງທີ່ບໍ່ແມ່ນພາສີ/ອາກອນ (NTB) ແລະ ສິ່ງກີດຂວາງທີ່ມາຈາກການວາງມາດຕະການ (NTM) ແລະ ໃຫ້ຄໍາແນະນໍາແກ້ໄຂຍົກເລີກສິ່ງກີດຂວາງທີ່ໄດ້ພົບເຫັນນໍາພາກສ່ວນທີ່ກ່ຽວຂ້ອງ. ສຄອຊ ຈະໄດ້ຈັດຕັ້ງປະຕິບັດບັນດາກິດຈະກໍາຂອງຄະນະທີ່ປຶກສາທຸລະກິດອາຊຽນ (ASEAN-BAC) ແລະ ກິດຈະກໍາເຊື່ອມໂຍງຂອງປະເທດອາຊຽນ ໂດຍສະເພາະໃນປີ 2024 ທີ່ ສປປ ລາວ ຈະຮັບເປັນປະທານຂອງກຸ່ມອາຊຽນ. ໂດຍການຮ່ວມມືກັບສະພາການຄ້າ ແລະ ອຸດສະຫະກໍາແຂວງ ແລະ ນະຄອນຫຼວງ ຈະໄດ້ຈັດຕັ້ງຄະນະຮັບຜິດຊອບການຄ້າຊາຍແດນເພື່ອເກັບກໍາຂໍ້ມູນດ້ານການຄ້າຊາຍແດນ, ພັດທະນາແຜນ ເພື່ອປັບປຸງຖານະຂອງປະເທດໃນການນໍາເຂົ້າ-ສົ່ງອອກ ພ້ອມທັງໃຫ້ຄໍາແນະນໍາ ແລະ ການເຂົ້າຮ່ວມການເຈລະຈາ ການຄ້າກັບປະເທດເພື່ອນບ້ານ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ. ສຄອຊ ຈະໄດ້ສົ່ງເສີມການລົງທຶນທີ່ມີເງື່ອນໄຂຕາມລ່ອງເສັ້ນທາງລົດໄຟ ແລະ ເສັ້ນທາງດ່ວນລາວ-

ຈີນ ໂດຍການສຶກສາຂໍ້ມູນ ແລະ ຂຶ້ນບັນຊີບັນດາໂຄງການລົງທຶນ ເພື່ອຈັບຄູ່ທຸລະກິດ ແລະ ສະເໜີລັດຖະບານອະນຸມັດ. ໃນນີ້ຈະມີການຮ່ວມເຮັດບົດສຶກສາວິເຄາະຄວາມເປັນໄປໄດ້ຂອງໂຄງການ, ຈັດຕັ້ງການສະເໜີໂຄງການລົງທຶນຕ່າງປະເທດ ໂດຍການໄປຢ້ຽມຢາມປະເທດທີ່ເປັນເປົ້າໝາຍ ແລະ ເຊື້ອເຊີນນັກລົງທຶນມາຢາມ ພ້ອມທັງຈັດຕັ້ງງານວາງສະແດງ " ລົງທຶນໃນລາວ- Invest in Laos" ໃນປີ 2021 ແລະ 2024 ປີທີ່ ສປປ ລາວ ເປັນປະທານອາຊຽນ.

**ເສົາຄໍ້າ V :** ເວົ້າເຖິງກິດຈະກຳຜູ້ໃຊ້ແຮງງານພາຍໃຕ້ການຮ່ວມມື 3 ຝ່າຍຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການກຳມະບານ. ທີ່ປະກອບມີການສົ່ງເສີມຜູ້ປະກອບການໃຫ້ມີທັກສະເປັນມືອາຊີບ ໃນການຄຸ້ມຄອງທຸລະກິດ ແລະ ຄຸ້ມຄອງແຮງງານ. ໃນວຽກງານດັ່ງກ່າວຈະໄດ້ຮ່ວມມືກັບລັດຖະບານ ສ້າງຕັ້ງລະບົບສຶກສາຄິດໄລ່ເງິນເດືອນຕໍ່າສຸດຕາມສະພາບຕົວຈິງ. ສຄອຊ ຈະສະໜອງການຝຶກອົບຮົມ ເພື່ອປັບປຸງຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານໃນບັນດາບໍລິສັດຢູ່ ສປປ ລາວ ພ້ອມທັງໄດ້ມີການຢັ້ງຢືນມາດຖານດັ່ງກ່າວ. ສະເພາະວຽກງານການພັດທະນາການສຶກສາເຕັກນິກວິຊາຊີບ (TVET) ສຄອຊ ຈະສຸມໃສ່ການຈັດຕັ້ງ ແລະ ປະຕິບັດການສຶກສາຝຶກອົບຮົມແບບຄວບຄູ່ (DCT) ໂດຍການຮັບປະກັນໃຫ້ມາດຕະຖານດ້ານທັກສະ ແລະ ຄວາມສາມາດທີ່ຕ້ອງການເຂົ້າຢູ່ໃນກອບຂອງວຽກງານ DCT ແລະ ໂດຍການຈັດຕັ້ງໜ່ວຍງານຊ່ວຍເຫຼືອຜູ້ເຂົ້າຮ່ວມ DCT ຢູ່ໃນແຂວງທີ່ມີເງື່ອນໄຂ. ເພື່ອປັບປຸງການເຄື່ອນໄຫວຂອງແຮງງານໃນຕະຫລາດແຮງງານ ສຄອຊ ຈະໄດ້ຈັດງານຕະຫຼາດແຮງງານ/ຈັດຫາງານ ເປັນປະຈຳ. ເພື່ອເພີ່ມທະວີຄວາມສາມາດຂອງຜູ້ປະກອບການ ທີ່ມີຢູ່ໃນປະເທດ ສຄອຊ ຈະສ້າງໂຄງການຍົກລະດັບການສຶກສາໃນວິຊາບໍລິຫານທຸລະກິດລະດັບປະລິນຍາໂທ MBA ແລະ mini-MBA ໃຫ້ແກ່ເຂົາເຈົ້າ.

**ເສົາຄໍ້າ VI :** ແມ່ນໄປຕາມວັດຖຸປະສົງສອງຢ່າງຄື: ການສ້າງຕັ້ງ ແລະ ຈັດຕັ້ງປະຕິບັດລະບົບການຄຸ້ມຄອງວຽກງານຂອງສະພາການຄ້າ ແຕ່ສູນກາງເຖິງທ້ອງຖິ່ນທີ່ສອດຄ່ອງ ລວມທັງການຄຸ້ມຄອງວຽກງານເຖິງບັນດາກຸ່ມ/ສະມາຄົມທຸລະກິດ ໂດຍການພັດທະນາລະບົບສະມາຊິກ ແລະ ລະບົບຂໍ້ມູນຂ່າວສານ. ດຳລັດເລກທີ່ 237/ນຍ ໄດ້ໃຫ້ມີການຂະຫຍາຍສະມາຊິກໂດຍບັງຄັບ. ປະຕິບັດຕາມດຳລັດດັ່ງກ່າວຈຳນວນສະມາຊິກຈະເພີ່ມຂຶ້ນຢ່າງຫຼວງຫຼາຍ ດັ່ງນັ້ນຈັດຕ້ອງໄດ້ມີການປັບປຸງລະບົບການຄັດເລືອກຕົວແທນ ແລະ ການຈັດຕັ້ງໃຫ້ທຸກທຸກພາກສ່ວນໄດ້ເຂົ້າຮ່ວມວຽກງານ ແລະ ກອງປະຊຸມຕ່າງໆຂອງ ສຄອ. ໄປພ້ອມກັນນັ້ນຈະຕ້ອງໄດ້ປັບປຸງລະບົບການຈັດຕັ້ງ ແລະ ຄຸ້ມຄອງວຽກງານຂອງສະພາການຄ້າ ແລະ ຂອງສະມາຄົມທຸລະກິດທັງໝົດໃຫ້ສອດຄ່ອງ. ສຄອຊ ຈະພັດທະນາລະບົບດັ່ງກ່າວ ແລະ ຈັດຕັ້ງການຝຶກອົບຮົມ ແລະ ໃຫ້ຄຳແນະນຳຕໍ່ບັນດາອົງການຈັດຕັ້ງຂອງພາກທຸລະກິດລະດັບຕ່າງໆ. ການພັດທະນາຖານຂໍ້ມູນຂອງສະມະຊິກແມ່ນມີຄວາມສຳຄັນ ເພື່ອເປັນຂໍ້ມູນສຶກສາຄົ້ນຄ້ວາໃຫ້ແກ່ສະມາຊິກ, ກຸ່ມ, ສະມາຄົມທຸລະກິດ ແລະ ໃຫ້ແກ່ລັດຖະບານ. ດັ່ງນັ້ນ, ສຄອຊ ຈະໄດ້ຈັດຕັ້ງການສຳຫຼວດເກັບກຳຂໍ້ມູນ ແລະ ວິເຄາະຂໍ້ມູນເສດຖະກິດ ແລະ ສະສົມໄວ້ໃນຖານຂໍ້ມູນທີ່ເປັນລະບົບດີຊີຕານ ພ້ອມທັງຜັນແປຂໍ້ມູນເປັນບົດລາຍງານ ແລະ ບົດສຶກສາດ້ານທຸລະກິດ ແລະ ເສດຖະກິດຢ່າງເປັນປະຈຳ.

# 1. ຄຳນຳ

## 1.1. ວັດຖຸປະສົງ

ສປປ ລາວ ໄດ້ຖືກຍົກຖານະຈາກການເປັນປະເທດທີ່ມີລາຍໄດ້ຕໍ່າມາເປັນປະເທດທີ່ມີລາຍໄດ້ຕໍ່າປານກາງ ໃນຕົ້ນປີ 2020 ແລະ ມີແຜນທີ່ຈະຍົກຖານະຂອງຕົນອອກຈາກການເປັນປະເທດດ້ອຍພັດທະນາໃນອະນາຄົດອັນໃກ້ນີ້. ການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດແມ່ນປະທັບໃຈ ແລະ ໃນປະຫວັດສາດຂອງປະເທດຊາດນີ້ ເປັນເທື່ອທຳອິດທີ່ມີເສັ້ນທາງລົດໄຟໄລຍະໄກທີ່ເຊື່ອມຕໍ່ ສູນກາງເສດຖະກິດທີ່ນະຄອນຫຼວງວຽງຈັນກັບບັນດາຕົວເມືອງຢູ່ເຂດເໜືອຂອງປະເທດ ແລະ ກັບ ສປ ຈີນໃນທ້າຍປີ 2021.

ເຖິງຢ່າງໃດກໍຕາມ ສປປ ລາວ ຍັງມີສິ່ງທ້າທາຍຫຼາຍຢ່າງ ແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດແມ່ນບໍ່ຄ່ອຍດີ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ຜ່ານມາແມ່ນໄດ້ອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດເປັນຕົ້ນຕໍ ທີ່ເປັນອຸດສາຫະກຳທີ່ບໍ່ໃຫ້ມີວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ຊາວປະຊາກອນທີ່ໜຸ່ມນ້ອຍທີ່ມີຄຸນສົມບັດໄດ້ຫຼາຍ. ຍິ່ງໄປກວ່ານັ້ນ ຖານະເສດຖະກິດບໍ່ມີຄວາມຫຼາກຫຼາຍ ແລະ ມີຄວາມທັນສະໄໝ, ພ້ອມທັງມີລັກສະນະອ່ອນເພຍ ແລະ ບໍ່ຍືນຍົງ. ການຫລຸດພົ້ນອອກຈາກບັນຊີປະເທດດ້ອຍພັດທະນາອາດຈະມີຜົນກະທົບທາງລົບ ຍ້ອນການຍົກເລີກສິດທິພິເສດທາງດ້ານການຄ້າ ແລະ ຈະເພີ່ມການເອື່ອຍອີງດ້ານເສດຖະກິດນຳ ສປ ຈີນ ແລະ ບັນດາປະເທດເພື່ອນບ້ານອີກຕື່ມ. ການສຶກສາຂອງທະນາຄານໂລກໄດ້ໃຫ້ເຫັນວ່າ ໜີ້ສິນຂອງປະເທດແມ່ນຈະກວມເຖິງ 65 - 68 % ຂອງ GDP ແລະ ການຂາດດຸນງົບປະມານຂອງລັດແມ່ນຈະເຖິງ 7,5 - 8,8 % ຂອງ GDP.

ຍິ່ງໄປກວ່ານັ້ນການລະບາດຂອງພະຍາດ COVID-19 ໃນຕົ້ນປີ 2020 ແມ່ນໄດ້ກະທົບໃສ່ສະພາບເສດຖະກິດຂອງປະເທດຢ່າງຮ້າຍແຮງ ແລະ ຖືໄດ້ວ່າອຸທົກກະໄພເສດຖະກິດລະດັບໂລກທີ່ບໍ່ແມ່ນສົງຄາມ ທີ່ໄດ້ມາຄອບງຳປະເທດຊາດ.

ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາເສດຖະກິດທີ່ທັນສະໄໝ, ມີຜົນປະໂຫຍດໃຫ້ສ່ວນລວມ ແລະ ມີຄວາມຍືນຍົງ ມັນມີຄວາມຈຳເປັນພັດທະນາພາກ/ຂະແໜງ ທຸລະກິດເອກະຊົນໃຫ້ມີຄວາມເຂັ້ມແຂງ, ມີນະວັດຕະກຳ ແລະ ມີຄວາມທົນທານ. ແຜນຍຸດທະສາດສະບັບນີ້ຂອງ ສຄອຊ ທີ່ເປັນອົງການຈັດຕັ້ງສູງສຸດຂອງພາກທຸລະກິດເປັນການລະບຸຊ່ອງທາງ ແລະ ວິທີການໃນການບັນລຸເປົ້າໝາຍດັ່ງກ່າວ.

## 1.2. ວິທີການໃນການຮ່າງແຜນຍຸດທະສາດ

ການພັດທະນາແຜນຍຸດທະສາດນີ້ ໄດ້ເລີ່ມຈາກການປະເມີນຜົນສຳເລັດຂອງແຜນຍຸດທະສາດພັດທະນາ ພາກທຸລະກິດ 2018 - 2020, ການວິເຄາະການປ່ຽນແປງຂອງແວດລ້ອມທີ່ອຳນວຍໃຫ້ການດຳເນີນທຸລະກິດ, ການວິເຄາະຜົນກະທົບຂອງການລະບາດຂອງພະຍາດ COVID-19 ຕໍ່ທຸລະກິດລາວ ແລະ ການນຳເອົາເນື້ອໃນຂອງດຳລັດເລກທີ່ 237/ນຍ ລົງວັນທີ 18 ພຶດສະພາ 2020 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສຄອຊ ມາປະກອບເຂົ້າອີກດ້ວຍ. ຫຼັງຈາກນັ້ນ ສະພາບແວດລ້ອມທີ່ ສຄອຊ ໄດ້ມີການເຄື່ອນໄຫວໄດ້ມາປະເມີນເພີ່ມເຕີມ. ໂດຍການ

ປະເມີນຄວາມເຂັ້ມແຂງ-ຈຸດອ່ອນ-ກາລະໂອກາດ ແລະ ສິ່ງທ້າທາຍ (SWOT) ແລະ ວິເຄາະສະພາບພາຍນອກ (PESTLE) ຕື່ມ ຂອງຄະນະບໍລິຫານງານໃນການຈັດຕັ້ງປະຕິບັດແຜນຍຸດທະສາດຜ່ານມາ.

ເນື້ອໃນ ແລະໂຄງສ້າງຂອງແຜນພັດທະນາເສດຖະກິດສັງຄົມ ແຜນ 9, ແຜນການບັນລຸເປົ້າໝາຍການພັດທະນາແບບຍືນຍົງສໍາລັບ 10 ປີ 2015-2025 ແລະ ວິໄສທັດປີ 2030 ກໍ່ໄດ້ນໍາເອົາມາເສີມໃສ່.

ພາຍຫລັງໄດ້ສ້າງພື້ນຖານຂອງຮ່າງແຜນຍຸດທະສາດແລ້ວ ກໍໄດ້ມີການພົບປະກັບພາກສ່ວນ ແລະ ບຸກຄົນທີ່ກ່ຽວຂ້ອງປະກອບດ້ວຍຄະນະນໍາ, ຄະນະບໍລິຫານງານ ເພື່ອເກັບກໍາເອົາແນວຄວາມຄິດ ແລະ ຂໍ້ສະເໜີຕໍ່ເປົ້າໝາຍ ແລະ ກິດຈະກໍາຂອງແຜນຍຸດທະສາດ.

ຜົນຈາກການຄົ້ນຄ້ວາໄດ້ຖືກນໍາສະເໜີ, ແລະ ປຶກສາຫາລື ແລະ ຮັບຮອງໃນກອງປະຊຸມສໍາມະນາຫຼາຍໆຄັ້ງນໍາຂັ້ນນໍາ, ຄະນະບໍລິຫານງານ, ພາກສ່ວນທຸລະກິດ ແລະ ພະນັກງານທີ່ກ່ຽວຂ້ອງ.

# 2. ແວດລ້ອມຍຸດທະສາດ ແລະ ການເຄື່ອນໄຫວວຽກງານຂອງ ສຄອຊ

## 2.1. ສະພາບດ້ານເສດຖະກິດ

### 2.1.1. ສະພາບການພັດທະນາເສດຖະກິດປະຈຸບັນ

ອັດຕາການຂະຫຍາຍຕົວຂອງເສດຖະກິດຕໍ່ຫົວໜ່ວຍຄົນ (GDP) ຂອງ ສປປ ລາວ ໄດ້ຂະຫຍາຍຕົວໃນລະດັບ 7.2% ຕໍ່ປີ ລະຫວ່າງປີ 2010 ເຖິງ 2019, ແລະ ໄດ້ມີທ່າລົງຄ້ອຍຈາກການຂະຫຍາຍຕົວ 8.5% ໃນປີ 2010 ມາຢູ່ໃນລະດັບ 5% ໃນປີ 2019. ສາເຫດທີ່ມີສະພາບເສດຖະກິດທີ່ຫຼຸດຖອຍລົງໃນປີ 2019 ແມ່ນເນື່ອງມາຈາກຫຼາຍບັນຫາໃນຂະແໜງການກະສິກໍາ (ທີ່ມາຈາກການກະທົບຂອງສະພາບນໍ້າຖ້ວມໃນພາກໃຕ້, ໄພແຫ້ງແລ້ງໃນພາກເໜືອ, ພະຍາດໄຂ້ອາຟຣິກຂອງໂຕໝູ, ສັດຕູພືດກະທົບການຜະລິດສາລີ, ໄພແຫ້ງແລ້ງຍັງໄດ້ກະທົບການຜະລິດພະລັງງານໄຟຟ້າໄປດ້ວຍ, ພ້ອມນັ້ນການຜະລິດບໍ່ແຮ່ຖືກກະທົບຈາກຄຸນນະພາບ ແລະ ປະລິມານຂອງແຮ່ທາດທີ່ມີ. ໃນປີ 2020 ຜົນກະທົບຂອງການລະບາດຂອງພະຍາດ COVID-19 ໄດ້ກະທົບຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງແນ່ນອນ ແຕ່ຍັງມີຄວາມສາມາດໃນການຟື້ນຟູເສດຖະກິດໃນປີ 2021 ແລະ ຕໍ່ໄປ ໂດຍອີງໃສ່ການຟື້ນຟູອຸດສາຫະກໍາການບໍລິການ ແລະ ການຂະຫຍາຍປະລິມານການຜະລິດກະແສໄຟຟ້າ.

ສປປ ລາວ ມີ GDP 2.568 ໂດລາ (ໃນປີ 2019) ແລະ ໄດ້ຖືກຈັດອັນດັບເປັນປະເທດທີ່ມີລາຍຮັບອັນດັບກາງຫາຕໍ່າ.

ຂະແໜງກະສິກໍາມີ 2/3 ຂອງປະຊາກອນທີ່ອາໃສຢູ່ໃນແຕ່ການຜະລິດ ແມ່ນເພື່ອການກຸ້ມຕົນເອງໂດຍສ່ວນຫຼາຍ. ຂະແໜງດັ່ງກ່າວປະກອບສ່ວນພຽງແຕ່ 16% ຂອງ GDP ແລະ ມີການຂະຫຍາຍຕົວອັນດັບຕໍ່າເຖິງ 0.9% ໃນປີ 2019.

ຂະແໜງອຸດສາຫະກຳກວມເອົາ 31.5% ຂອງ GDP (ໃນນີ້ພາກອຸດສາຫະກຳປຸງແຕ່ງແມ່ນໜ້ອຍກວ່າ ¼ ຂອງຈຳນວນການຜະລິດລວມ) ແລະ ມີການຂະຫຍາຍຕົວໃນອັນດັບ 7.8% ໃນປີ 2019, ຂະແໜງການບໍລິການແມ່ນກວມເອົາ 42% ຂອງ GDP ແລະ ມີການຂະຫຍາຍຕົວໃນອັນດັບ 6.8% ແລະ ນຳໃຊ້ 23% ຂອງປະຊາກອນໃນປີ 2019.

ຂະແໜງການທີ່ປະກອບສ່ວນເປັນຈຳນວນຫຼາຍເຂົ້າ GDP ປະກອບດ້ວຍ:

- ການຄ້າຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງ (14% ຂອງ GDP),
- ໄຟຟ້າ (11%),
- ປູກຝັງ (9.7%),
- ບໍ່ແຮ່ (8.5%),
- ກໍ່ສ້າງ (7.9%),
- ອະສັງຫາລິມະຊັບ (6.7%).[1]

*ຮູບພາບ 1: ການແຈກຢາຍຂອງວິສາຫະກິດໃນແຕ່ລະເຂດ*




ແຫຼ່ງທີ່ມາຂອງຂໍ້ມູນ: ຂໍ້ມູນວິສາຫະກິດແຫ່ງຊາດ http://www.erm.gov.la/index.php/en/explore-data-en/statistics ວັນທີ 28/04/2020.

[1]Bank of the Lao PDR: Annual Economic Report 2018. P. 20.

ໜຶ່ງສ່ວນສາມຂອງວິສາຫະກິດທີ່ໄດ້ຂຶ້ນທະບຽນເປັນທາງການຈຳນວນ 166,341 ວິສາຫະກິດ ແມ່ນໄດ້ຈົດໃນນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງຈຳປາສັກ ແລະ ແຂວງວຽງຈັນ ສ່ວນວິສາຫະກິດທີ່ຈົດທະບຽນໃນແຂວງອື່ນໆນັ້ນແມ່ນມີພຽງ 24% ຂອງຈຳນວນວິສາຫະກິດທັງໝົດ.

ໂດຍການເປັນປະເທດສັງຄົມນິຍົມ ສປປ ລາວ ຍັງມີລັດວິສາຫະກິດຈຳນວນຈຳກັດ ແລະ ຈະຢູ່ໃນຂະແໜງໄຟຟ້າ, ການສະໜອງເຄື່ອງອຸປະໂພກ (ທັນຍາຫານ ແລະ ນ້ຳປະປາ), ການເງິນທະນາຄານ ແລະ ໂທລະຄົມມະນາຄົມ.

ເນື່ອງຈາກມີສະພາບການຂາດເຂີນດ້ານແຮງງານທີ່ມີການສຶກສາ ແລະ ມີທັກສະໃນຕະຫຼາດແຮງງານ ເຮັດໃຫ້ມີຫຼາຍວິສາຫະກິດມີຄວາມຈຳກັດໃນການຜະລິດ ແລະ ແຂ່ງຂັນ.

ຜົນກະທົບຂອງໄພທຳມະຊາດໃນປີ 2019 ໄດ້ໃຫ້ເຫັນຈຸດອ່ອນຂອງເສດຖະກິດລາວ ບໍ່ພຽງແຕ່ໃນດ້ານການຜະລິດກະສິກຳ ແຕ່ໃນດ້ານການຜະລິດກະແສໄຟຟ້າເຊັ່ນດຽວກັນ. ສອງຂະແໜງການນີ້ແມ່ນເປັນກະດູກສັນຫຼັງຂອງພາກອຸດສາຫະກຳໃນປະເທດ. ຂະແໜງການກໍ່ສ້າງໄດ້ມີການຂະຫຍາຍຕົວຢ່າງສູງ ຍ້ອນການສ້າງໂຄງການຂະໜາດໃຫຍ່ເຊັ່ນ: ໂຄງການເສັ້ນທາງລົດໄຟລາວ-ຈີນ. ຈຳນວນນັກທ່ອງທ່ຽວທີ່ມາຢ້ຽມຢາມໄດ້ມີການຂະຫຍາຍຕົວ ແລະ ໄດ້ເພີ່ມທະວີການຂະຫຍາຍຕົວດ້ານເສດຖະກິດຂອງຂະແໜງການບໍລິການເປັນ 7.2%. ສະພາບອັດຕາແລກປ່ຽນເງິນກີບທີ່ຕົກຕໍ່າ ແລະ ການເພີ່ມຂຶ້ນຂອງລາຄາຜະລິດຕະພັນກະສິກຳໃນທ້ອງຕະຫຼາດໃນໄລຍະ 6 ເດືອນທ້າຍປີ 2019 ໄດ້ເຮັດໃຫ້ອັດຕາເງິນເຟີ້ເຖິງ 3.3%. ໃນທ້າຍປີ 2019 ສະພາບການຂາດດຸນງົບປະມານແຫ່ງລັດແມ່ນເຖິງ 9.5% ຂອງ GDP, ກອງທຶນສຳຮອງແມ່ນໄດ້ເພີ່ມຂຶ້ນ ແຕ່ສາມາດກຸ້ມໄດ້ 6 ອາທິດຂອງການນຳເຂົ້າ.

ໂດຍສັງລວມແລ້ວ ເສດຖະກິດແມ່ນໄດ້ອີງໃສ່ການຜະລິດໃນຂະແໜງການທີ່ນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນພື້ນຖານໃນການສ້າງລາຍຮັບ ແຕ່ມີບັນຫາການກະທົບຕໍ່ສິ່ງແວດລ້ອມ. ເສດຖະກິດລາວຍັງບໍ່ໄດ້ພັດທະນາບັນດາອຸດສາຫະກຳພື້ນຖານເບື້ອງລຸ່ມຢ່າງຫຼາກຫຼາຍ, ລວມທັງທຸລະກິດທີ່ມີນະວັດຕະກຳສ້າງເສດຖະກິດທີ່ມີຄວາມຫຼາກຫຼາຍທີ່ສາມາດສ້າງວຽກເຮັດງານທຳຈຳນວນຫຼາຍເພື່ອຫຼຸດຜ່ອນຄວາມທຸກຍາກ, ການກະຈາຍລາຍໄດ້ຢ່າງທົ່ວເຖິງ ແລະ ມີຄວາມສົມດູນໃນການພັດທະນາເສດຖະກິດພາຍໃນເຂດແຄ້ວນຕ່າງໆໃນປະເທດ. ຍັງມີຄວາມບໍ່ເທົ່າທຽມກັນທາງດ້ານລາຍຮັບໃນສັງຄົມ ແລະ ສະພາບດັ່ງກ່າວກໍ່ໄດ້ເພີ່ມຂຶ້ນໃນໄລຍະຊຸມປີຜ່ານມາ. ເຫັນໄດ້ວ່າ 75% ຂອງການຈ້າງງານຂອງຂະແໜງການທີ່ບໍ່ນອນໃນກະສິກຳແມ່ນຢູ່ໃນນອກລະບົບ.

ວິສາຫະກິຂະໜາດນ້ອຍຂະໜາດກາງ (SME) ແມ່ນກວມເອົາຫຼາຍກວ່າ 90% ຂອງຈຳນວນວິສາຫະກິດທີ່ມີທັງໝົດ ແຕ່ການປະກອບສ່ວນຂອງວິສາຫະກິດ SME ໃນການຂະຫຍາຍຕົວຂອງເສດຖະກິດຂອງຊາດແມ່ນຍັງຕໍ່າຫຼາຍ.

ເຖິງແມ່ນວ່າມີການຂະຫຍາຍຕົງຂອງ GDP ແລະ GDP ຕໍ່ຫົວຄົນ, ທີ່ເຮັດໃຫ້ ສປປ ລາວ ໄດ້ຖືກຈັດເປັນປະເທດທີ່ມີລາຍຮັບປານກາງອັນດັບຕໍ່າໃນປີ 2020 ເສດຖະກິດຂອງປະເທດຍັງອ່ອນແອ ແລະ ມີຄວາມສ່ຽງຫຼາຍອັນ ໂດຍສະເພາະຈາກການປ່ຽນແປງຂອງສະພາບແວດລ້ອມ, ສະພາບໜີ້ສິນຂອງລັດທີ່ມີມູນຄ່າສູງ ພ້ອມທັງມີ ສປ ຈີນ ເປັນເຈົ້າຂອງ 42% ຂອງຈຳນວນໜີ້ສິນຂອງລັດທັງໝົດ, ແລະ ສະພາບການຂາດດູນງົບປະມານຂອງລັດ, ການອີງໃສ່ລາຍຮັບຈາກຂະແໜງການຈຳນວນໜຶ່ງ ແລະ ຈາກການກໍ່ສ້າງໂຄງການຂະໜາດໃຫຍ່ເທົ່ານັ້ນ, ຄວາມສ່ຽງອັນໜຶ່ງທີ່ເພີ່ມເຕີມແມ່ນລາຄາການຂົນສົ່ງທີ່ເນື່ອງມາຈາກສະພາບການບໍ່ມີທາງອອກສູ່ທະເລ.

ລັດຖະບານ ສປປ ລາວ ໄດ້ເຫັນຂໍ້ຈຳກັດຂອງໂຄງປະກອບເສດຖະກິດແຫ່ງຊາດ ແລະ ໄດ້ລິເລີ່ມຈັດຕັ້ງການປະຕິຮູບເສດຖະກິດໃຫ້ມີຄວາມຫຼາກຫຼາຍ, ມີພື້ນຖານຫຼາຍກວ່າເກົ່າ, ມີລັກສະນະສີຂຽວ ແລະ ມີສ່ວນຮ່ວມຂອງທຸກໆພາກສ່ວນໃນການພັດທະນາ ໃນນັ້ນລວມເຖິງການຖືເອົາຄວາມສຳຄັນໃນການປັບປຸງແວວລ້ອມການດຳເນີນທຸລະກິດ ແລະ ການອຳນວຍຄວາມສະດວກໃຫ້ແກ່ການລົງທຶນເປັນບູລິມະສິດຂອງການພັດທະນາເສດຖະກິດ.

### 2.1.2 ສະພາບແວດລ້ອມການດຳເນີນທຸລະກິດ

ສະພາບແວດລ້ອມໃນການດຳເນີນທຸລະກິດໃນ ສປປ ລາວ ແມ່ນບໍ່ຄ່ອຍດີປານໃດ ມັນເປັນອຸປະສັກໃຫ້ແກ່ການພັດທະນາເສດຖະກິດທີ່ມີຄວາມຫຼາກຫຼາຍ, ມີນະວັດຕະກຳ ແລະ ທີ່ບໍ່ອີງໃສ່ການຂຸດຄົ້ນເອົາຊັບພະຍາກອນເປັນຫຼັກ.

ສະພາບດັ່ງກ່າວແມ່ນຂຶ້ນກັບຫຼາຍປັດໃຈທີ່ປະກອບດ້ວຍ: ຂະໜາດຂອງຕະຫຼາດພາຍໃນແມ່ນໜ້ອຍ, ມີການຂາດເຂີນແຮງງານທີ່ມີການສຶກສາ ທັກສະ ແລະ ຄວາມສາມາດ, ຄ່າໃຊ້ຈ່າຍການຂົນສົ່ງສູງ, ການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ຍັງອ່ອນ ແລະ ບາງຄັ້ງແມ່ນປະຕິບັດກົງກັນຂ້າມກັບກົດໝາຍ, ມີລະບົບການບໍລິການເກື້ອກູນ, ລະບົບການປັບປຸງການຜະລິດເພີ່ມລາຍໄດ້ໃຫ້ຜູ້ອອກແຮງງານບໍ່ແທດເໝາະ, ຂາດນະວັດຕະກຳ, ຂາດຄວາມໂປ່ງໃສໃນການເຂົ້າເຖິງຂໍ້ມູນດ້ານທຸລະກິດ, ມີການຮ່ວມມືລະຫວ່າງທຸລະກິດ (B2B) ໜ້ອຍ ແລະ ບັນຫາອື່ນໆ.

ສະພາບແວດລ້ອມທຸລະກິດທີ່ບໍ່ເອື້ອອຳນວຍໄດ້ສະແດງອອກ ໃນການຈັດອັນດັບປະເພດຕ່າງໆຂອງອົງການຈັດຕັ້ງສາກົນດັ່ງລຸ່ມນີ້:

- ສປປ ລາວ ຖືກຈັດເປັນອັນດັບທີ່ 154 ທຽບໃສ່ 190 ປະເທດ ໃນດັດສະນີການອຳນວຍຄວາມສະດວກໃຫ້ແກ່ທຸລະກິດຂອງທະນາຄານໂລກ, ໃນບັນດາປະເທດອາຊຽນ ປະເທດມຽນມາແມ່ນຫຼູດ ສປປ ລາວ.
- ບົດລາຍງານສາກົນປີ 2019 ວ່າດ້ວຍຄວາມສາມາດໃນການແຂ່ງຂັນໄດ້ຈັດ ສປປ ລາວເປັນທີ່ 113 ທຽບໃສ່ 141 ປະເທດສະແດງໃຫ້ເຫັນວ່າຄວາມສາມາດໃນການແຂ່ງຂັນແມ່ນດ້ອຍກວ່າປະເທດຕ່າງໆໃນອາຊຽນ ແລະ ອາຊີປາຊີຟິກ (ປະເທດມຽນມາແມ່ນບໍ່ໄດ້ຢູ່ໃນບົດລາຍງານດັ່ງກ່າວ)[2]
- ບໍລິສັດ ມູດີ (Moody's Investor Service) ໄດ້ຈັດອັນດັບຄວາມສ່ຽງໃນການລົງທຶນເປັນ B3 ທີ່ເປັນແງ່ມຸມທາງບວກ, ອັນດັບ B3 ແມ່ນອັນດັບຕ່ຳສຸດໃນກຸ່ມປະເທດອາຊຽນ (ປະເທດບຣູໄນ ແລະ ມຽນມາ ບໍ່ໄດ້ມີຂໍ້ມູນ) ແຕ່ຂັ້ນ B3 ດັ່ງກ່າວນີ້ໄດ້ຖືກຫຼຸດລົງອີກໃນການປະເມີນຂອງບໍລິສັດໃນວັນທີ 19/6/2020.[3]
- ດັດສະນີນີ້ ການສໍ້ລາດບັງຫຼວງສາກົນປີ 2019 ໄດ້ໃຫ້ຄະແນນ 29 ຕໍ່ 100 (ຄະແນນດັ່ງກ່າວບໍ່ໄດ້ປ່ຽນແປງແຕ່ປີ 2017) ເຮັດໃຫ້ ສປປ ລາວ ເປັນທີ່ 130 ທຽບໃສ່ 180 ປະເທດ ໃນນັ້ນຄະແນນຂອງ ສປປ ລາວ ແມ່ນຍັງດີກວ່າປະເທດກຳປູເຈຍ ແລະ ມຽນມາ.[4]

---

[2]Schwab, K. (Ed.): The Global Competitiveness Report 2019. World Economic Forum. Geneva 2019, p. XIII
[3]Moody's: https://www.moodys.com/research/Moodys-places-Laoss-B3-ratings-on-review-for-downgrade--PR_425546 as of June 29th 2020.
[4]Transparency International: Corruption Perception Index 2019. P. 3. And: https://www.transparency.org/cpi2019 as of April 21st 2020.

- ສປປ ລາວ ໄດ້ຖືກຈັດເປັນທີ່ 128 ທຽບໃສ່ 180 ປະເທດ ໃນບົດລາຍງານສາກົນວ່າດ້ວຍ ເສລີພາບດ້ານເສດຖະກິດ ແລະ ໄດ້ຈັດ ສປປ ລາວ ເປັນອັນດັບທ້າຍສຸດໃນກຸ່ມປະເທດອາຊຽນ (ປະເທດມຽນມາບໍ່ມີໃນບົດລາຍງານ).[5] ດັດສະນີວ່າດ້ວຍເສລີພາບດ້ານເສດຖະກິດ ໄດ້ວິເຄາະເຖິງການຈັດຕັ້ງປະຕິບັດກົດໝາຍ (ໃນດັດຊະນີນີ້ແມ່ນໄດ້ຮັບຄະແນນຕໍ່າຫຼາຍ), ຂະໜາດຂອງໂຄງສ້າງຂອງລັດຖະບານ, ປະສິດທິພາບໃນການຄຸ້ມຄອງມະຫາພາກ, ແລະ ການເປີດກ້ວາງຕະຫຼາດ.[6]
- ດັດສະນີການປະຕິບັດລະບົບຂົນສົ່ງໂລຍິຊຕິກຂອງທະນາຄານໂລກໄດ້ຈັດ ສປປ ລາວ ໃນອັນດັບທີ 82 ທຽບໃສ່ 160 ປະເທດໃນປີ 2018. ລະບົບໂລຍິຊຕິກໃນ ສປປ ລາວ ແມ່ນໄດ້ມີການປັບປຸງ ເພາະລະດັບໄດ້ເພີ້ມຂຶ້ນຈາກອັນດັບ 152 ໃນປີ 2016.[7] ມັນເປັນຜົນສໍາເລັດອັນດີຖ້າທຽບໃສ່ການຈັດລະດັບ ເປັຣທີ 152 ໃນປີ 2016.[8]

*ຮູບພາບ 2: ການຈັດອັນດັບການອໍານວຍຄວາມສະດວກດ້ານທຸລະກິດ ສໍາລັບປະເທດໃນອາຊຽນໃນດັດສະນີໃນປີ 2020 ແລະ ໃນດັດສະນີການແຂ່ງຂັນລະດັບໂລກໃນປີ 2019*




ແຫຼ່ງທີ່ມາຂອງຂໍ້ມູນ: ກຸ່ມທະນາຄານໂລກ: ສະພາບການດໍາເນີນທຸລະກິດ 2020. Washington 2020, p. 4.
Schwab, K. (Ed.): ບົດລາຍງານທັດສະນະແຂ່ງຂັນເສດຖະກິດໂລກ 2019. ກອງປະຊຸມເສດຖະກິດໂລກ. Geneva 2019, p. XIII
The World Bank ranked 190 countries, the World Economic Forum 141 countries, omitting Myanmar.

---

[5]Miller, T. et al.: Highlights of the 2020 Index of Economic Freedom. The Heritage Foundation. Washington 2020, p. 2.
[6]https://www.heritage.org/index/pdf/2020/countries/laos.pdf as of April 21st 2020.
[7]The World Bank, https://lpi.worldbank.org/international/global as of August 26th 2020.
[8]The World Bank, https://lpi.worldbank.org/international/global/2016 as of August 26th 2020.

ເຖິງຢ່າງໃດກໍ່ຕາມຍັງມີອັນດັບດີຈຳນວນໜຶ່ງ,

- ສປປ ລາວ ໄດ້ຖືກຈັດເປັນອັນດັບທີ່ 43 ທຽບໃສ່ 152 ປະເທດ ໃນບົດລາຍງານສາກົນວ່າດ້ວຍຄວາມແຕກໂຕນດ້ານເພດຍິງ, ເປັນອັບດັບສູງສຸດໃນກຸ່ມປະເທດໃນອາຊີ ຮ່ວມກັບປະເທດຟີລິບປິນ; ໃນປະເພດດັດຊະນີຍ່ອຍການມີສ່ວນຮ່ວມ ແລະ ກາລະໂອກາດຂອງແມ່ຍິງໃນເສດຖະກິດ ສປປ ລາວ ແມ່ນເປັນທີ 3 ໃນໂລກ;[9]
- ສປປ ລາວ ຍັງຖືກຈັດເປັນອັນດັບທີ 105 ທຽບໃສ່ 156 ປະເທດ ໃນບົດລາຍງານສາກົນວ່າດ້ວຍຄວາມສຸກໃນໂລກ,[10]

ເວົ້າລວມແລ້ວ ແວດລ້ອມໃນການລົງທຶນ ແລະ ໂດຍສະເພາະໃນການດຳເນີນທຸລະກິດໃນ ສປປ ລາວ ແມ່ນບໍ່ອຳນວຍຖ້າທຽບໃສ່ອັນດັບສະເລ່ຍໃນພາກພື້ນຈຶ່ງມີຄວາມຫຍຸ້ງຍາກໃນການລະດົມການລົງທຶນຈາກພາຍນອກ ໂດຍສະເພາະການລົງທຶນໃນຂະແໜງທີ່ບໍ່ຂຸດຄົ້ນເອົາຊັບພະຍາກອນທຳມະຊາດ ແລະ ການລົງທຶນທີ່ມີຄຸນນະພາບໃສ່ຂະແໜງການໃໝ່ທີ່ຕ້ອງການພັດທະນາ. ດັ່ງນັ້ນ ຈະຕ້ອງໄດ້ມີການປະຕິຮູບ ແລະ ປັບປຸງນິຕິກຳ ພ້ອມທັງລະບົບການຄຸ້ມຄອງ ແລະ ບໍລິການຂອງລັດຖະບານໃຫ້ສອດຄ່ອງຂຶ້ນອີກຕື່ມ ແລະ ການຈັດຕັ້ງປະຕິບັດການປັບປຸງ ແລະ ປະຕິຮູບດັ່ງກ່າວຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດຢ່າງໜັກແໜ້ນ.

### 2.1.3. ສະພາບການລົງທຶນທຸລະກິດ

ໃນປັດຈຸບັນ ຂໍ້ມູນທາງດ້ານການລົງທຶນແມ່ນບໍ່ລະອຽດ ກະຊວງແຜນການ ແລະ ການລົງທຶນແມ່ນມີຂໍ້ມູນຂອງໂຄງການລົງທຶນທີ່ໄດ້ຖືກອະນຸມັດແລ້ວ ແຕ່ຂໍ້ມູນກ່ຽວກັບການປະຕິບັດໂຄງການແມ່ນບໍ່ໄດ້ມີການເຜີຍແຜ່, ຈຶ່ງບໍ່ຮູ້ໄດ້ວ່າໂຄງການລົງທຶນທີ່ໄດ້ມີການລົງທຶນຕົວຈິງມີຈຳນວນເທົ່າໃດ.

ຂໍ້ມູນການຈົດທະບຽນວິສາຫະກິດແມ່ນໄດ້ເກັບເອົາລາຍລະອຽດຂອງທຸກໆວິສາຫະກິດທີ່ລົງທະບຽນ ໂດຍມີການລະບຸລາຍລະອຽດຂອງການຄ້າ ແລະ ການລົງທຶນຂອງເຂົາເຈົ້າ.

ຍ້ອນຂໍ້ມູນບໍ່ຊັດເຈນ ແລະ ບໍ່ກົງກັນ ມັນມີຄວາມຫຍຸ້ງຍາກທີ່ຈະຈຳແນກຄວາມສຳຄັນຂອງການລົງທຶນຈາກຕ່າງປະເທດທຽບໃສ່ການລົງທຶນຈາກພາຍໃນປະເທດ. ໃນໄລຍະປີ 2010 ເຖິງ 2018 ຕົວເລກການຈົດທະບຽນການລົງທຶນຢູ່ທະບຽນວິສາຫະກິດແຫ່ງຊາດແມ່ນມີ 55 ຕື້ໂດລາ ໃນນັ້ນມີ 53% (35.6 ຕື້ໂດລາ) ເປັນທຶນຕ່າງປະເທດ. ແຕ່ຂໍ້ມູນຈາກກະຊວງແຜນການ ແລະ ການລົງທຶນໄດ້ແຈ້ງໃຫ້ຮູ້ວ່າມີພຽງແຕ່ໂຄງການຈຳນວນ 18 ຕື້ໂດລາ ທີ່ໄດ້ຖືກອະນຸມັດໃນໄລຍະດັ່ງກ່າວ ໃນນັ້ນແມ່ນການລົງທຶນຈາກຕ່າງປະເທດ 73% ຫຼື 13 ຕື້ໂດລາ.

ຂໍ້ມູນກ່ຽວກັບຈຳນວນເງິນທຶນທີ່ໄດ້ໂອນເຂົ້າມາໃນປະເທດກໍ່ຍັງບໍ່ລະອຽດ. ຕົວເລກຂອງທະນາຄານແຫ່ງ ສປປ ລາວ ແລະ ຂອງທະນາຄານໂລກແມ່ນບໍ່ກົງກັນ ແຕ່ໄດ້ມີການຮັບຮູ້ວ່າການໂອນເງິນເຂົ້າມາເພື່ອການລົງທຶນໃນໄລ

[9]World Economic Forum: Global Gender Gap Report 2020. Geneva 2019, p. 9 and 12.
[10]Helliwell, J.F. et al (Ed.): World Happiness Report 2019. New York 2019, p. 26.

ຍະ 2010 ແລະ 2018 ແມ່ນຢູ່ 7.7 ຕື້ໂດລາ ໃນໄລຍະດັ່ງກ່າວ. ດັ່ງນັ້ນ ພວກເຮົາສາມາດເວົ້າໄດ້ວ່າ ການລົງທຶນຈາກຕ່າງປະເທດແມ່ນມີຄວາມຕ້ອງການຫຼາຍ ບໍ່ແມ່ນພຽງແຕ່ເປັນການເອົາທຶນຮອນເຂົ້າມາປະເທດເທົ່ານັ້ນ ແຕ່ເປັນແຫຼ່ງ ແລະ ທ່າແຮງ ເພື່ອພັດທະນານະວັດຕະກໍາ ແລະ ເຕັກໂນໂລຢີ, ພ້ອມທັງເປັນທ່າແຮງໃນການເຂົ້າເຖິງຕະຫຼາດໃໝ່ ແລະ ໃນການສ້າງວຽກເຮັດງານທໍາ ແລະ ລາຍໄດ້ທີ່ໝັ້ນຄົງໃຫ້ແກ່ສັງຄົມ.

ເຖິງຢ່າງໃດກໍ່ຕາມ,ໃນທຸກມື້ນີ້ການລົງທຶນຈາກຕ່າງປະເທດ ແມ່ນໄດ້ລົງທຶນໃສ່ແຕ່ບາງຂະແໜງການຄື ພະລັງງານໄຟຟ້າ ແລະ ບໍ່ແຮ່ເປັນສ່ວນໃຫ່ຍ.

ຕາມຂໍ້ມູນສະຖິຕິຂອງກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ ແລະ ທະນາຄານແຫ່ງ ສປປ ລາວ ການລົງທຶນເກືອບ 80% ແມ່ນມາຈາກ 3 ປະເທດຄື ຈາກ ສປ ຈີນ, ປະເທດໄທ ແລະ ຫວຽດນາມ. ໂດຍມີການລົງທຶນຈາກ ສປ ຈີນ ທີ່ຂະຫຍາຍຕົວໂດຍໄວ, ສປ ຈີນ ຍັງບໍ່ພຽງແຕ່ເປັນຜູ້ລົງທຶນລາຍໃຫ່ຍ ແຕ່ເປັນຄູ່ຄ້າ ແລະ ຜູ້ໃຫ້ເງິນກູ້ລາຍໃຫ່ຍອີກດ້ວຍ ເຮັດໃຫ້ມີຄວາມສ່ຽງໃນການສ້າງຄວາມຫຼາກຫຼາຍໃນການພັດທະນາ.

### 2.1.4. ສະພາບການຄ້າຕ່າງປະເທດ

ການວິເຄາະສະພາບການຄ້າກັບຕ່າງປະເທດໃນ ສປປ ລາວ ມີຄວາມຫຍຸ້ງຍາກເນື່ອງຈາກ ສະຖິຕິໃນ ສປປ ລາວ ແລະ ຈາກບັນດາປະເທດຄູ່ຄ້າແມ່ນບໍ່ກົງກັນສະເໝີ. ບົດວິເຄາະຂອງອົງການການເງິນສາກົນ (IMF) ໄດ້ໃຫ້ຮູ້ວ່າການສົ່ງອອກໃນປະເທດອາດຈະຄາດເຄື່ອນ ຫຼື ບໍ່ຖືກລາຍງານໃນລະຫວ່າງ 8 ເຖິງ 50% ເຊັ່ນດຽວກັນກັບການນໍາເຂົ້າ ແມ່ນອາດຈະຄາດເຄື່ອນລະຫວ່າງ 30 ເຖິງ 70% ແລະ ການຂາດດູນການຄ້າອາດຈະຄາດເຄື່ອນລະຫວ່າງ 20 ເຖິງ 280% ສູງກວ່າຕົວຈິງ.

ເນື່ອງຈາກສະພາບດ້ານຂໍ້ມູນດັ່ງກ່າວ, ເອກະສານສະບັບນີ້ໄດ້ນໍາໃຊ້ຂໍ້ມູນຂອງສູນຂໍ້ມູນການຄ້າຂອງສະຫະປະຊາຊາດ (UN COMTRADE DATA). ຕາມຂໍ້ມູນດັ່ງກ່າວໃນປີ 2019 ສປປ ລາວໄດ້ສົ່ງອອກສິນຄ້າທີ່ມີມູນຄ່າ 5.6 ຕື້ໂດລາ ແລະ ນໍາເຂົ້າສິນຄ້າຈໍານວນ 5.6 ຕື້ໂດລາ ໂດຍມີການດຸ່ນດ່ຽງການຄ້າທາງນອກປະມານ 11.9 ລ້ານໂດລາ; ໃນຊຸມປີຜ່ານມາຕົວເລກການດຸ່ນດ່ຽງການຄ້າແມ່ນໄດ້ຂາດດຸນ. ການຄ້າຕ່າງປະເທດແມ່ນກວມເອົາ 64% ຂອງ GDP. ໃນນັ້ນການສົ່ງອອກແມ່ນໄດ້ສຸມໃສ່ປະເພດຜະລິດຕະພັນ ແລະ ຕະຫຼາດຈໍານວນໜຶ່ງ[11]. ການສົ່ງອອກຂອງກະແສໄຟຟ້າແມ່ນ 23% ຂອງຈໍານວນການສົ່ງອອກທັງໝົດ, ແລະ ແຮ່ທອງແດງແມ່ນກວມເອົາ 18%. ປາຍທາງຂອງການສົ່ງອອກແມ່ນໄປ 3 ປະເທດເປັນຕົ້ນຕໍ (89% ຂອງຈໍານວນການສົ່ງອອກທັງໝົດ). ໃນນັ້ນມີສົ່ງອອກໄປປະເທດໄທ 45.8%, ສປ ຈີນ 27% ແລະ ຫວຽດນາມ 16.1%).

[11] United Nations (Ed.): 2019 International Trade Statistics Yearbook, Vol I, New York 2020, p. 204.

*ຮູບພາບ 3: ສະຖິຕິການສົ່ງອອກສິນຄ້າຂອງ ສປປ ລາວ-ພັນລ້ານໂດລາ*




ແຫຼ່ງທີ່ມາຂອງຂໍ້ມູນ: ອົງການສະຫະປະຊາຊາດ (Ed.): ປື້ມສະຖິຕິປະຈໍາປີ 2019, Vol I, New York 2020, p. 204.

ກ່ຽວກັບຕົວເລກການນໍາເຂົ້າສິນຄ້າ, ນໍ້າມັນເຊື້ອໄຟເປັນຜະລິດຕະພັນທີ່ນໍາເຂົ້າເປັນຈໍານວນຫຼາຍ ທີ່ກວມເຖິງ 12.6% ຂອງການນໍາເຂົ້າທັງໝົດ. ນອກຈາກນີ້ຍັງມີການນໍາເຂົ້າສັດໃຫ່ຍ (4%), ສາຍໄຟ (3.7%). ປະເທດຕົ້ນທາງລາຍໃຫ່ຍທີ່ກວມເອົາ 86% ຂອງການນໍາເຂົ້າສິນຄ້າທັງໝົດມີ ປະເທດໄທ (50.7%), ສປ ຈີນ (26.6%), ແລະ ຫວຽດນາມ (8.5%).

*ຮູບພາບ 4: ຄູ່ຮ່ວມການຄ້າ ແລະ ຜະລິດຕະພັນສົ່ງອອກຂອງ ສປປ ລາວ ໃນປີ 2019*




ແຫຼ່ງທີ່ມາຂອງຂໍ້ມູນ: ອົງການສະຫະປະຊາຊາດ (Ed.): ປຶ້ມສະຖິຕິປະຈໍາປີ 2019, Vol I, New York 2020, p. 204, 205.

ຜະລິດຕະພັນທີ່ສົ່ງອອກເປັນກະແສໄຟ ແລະ ທອງແດງເປັນຕົ້ນຕໍ, ຜະລິດຕະພັນກະສິກໍາກໍມີຈໍານວນທີ່ຫຼາຍສົມຄວນ, ຜະລິດຕະພັນສິນຄ້າກະສິກໍາທີ່ສົ່ງອອກມີ ຢາງພາລາ ໄປ ສປ ຈີນ ແລະ ຫວຽດນາມ, ຍັງມີໝາກກ້ວຍ ທີ່ມີປະລິມານການສົ່ງອອກໄດ້ເພີ່ມຂຶ້ນໃນໄລຍະປີ 2015 ເຖິງ 2019 ການສົ່ງອອກແມ່ນໄປ ສປ ຈີນ[12] ແລະ ປະເທດໄທ. ກາເຟ ກໍເປັນຜະລິດຕະພັນສົ່ງອອກທີ່ສໍາຄັນລວມທັງ ຜະລິດຕະພັນໄມ້ ໄປ ສປ ຈີນ, ແລະ ສັດໃຫ່ຍໄປຫວຽດນາມ.

ຜະລິດຕະພັນທີ່ມາຈາກອຸດສາຫະກໍາປຸງແຕ່ງແມ່ນເລີ້ມຂະຫຍາຍຕົວ ໂດຍສະເພາະດ້ານຊິ້ນສ່ວນປະກອບເອເລັກໂຕຣນິກເຊັ່ນ: ເຄື່ອງສື່ສານ, ສ່ວນປະກອບຂອງໂທລະທັດ, ລະບົບໂທລະສັບ, ກ້ອງຖ່າຍຮູບ ແລະ ອື່ນໆ ທີ່ຜະລິດຢູ່ເຂດເສດຖະກິດພິເສດຢູ່ ແຂວງສະຫວັນນະເຂດ. ນອກນັ້ນຍັງມີຜະລິດຕະພັນອາຫານ ແລະ ເຄື່ອງດື່ມເຊັ່ນ: ເບຍ ແລະ ອຸດສາຫະກໍາຕັດຫຍິບ ທີ່ລວມສູນຢູ່ນະຄອນຫຼວງວຽງຈັນ.

ການຄ້າຂາຍດ້ານການບໍລິການມີຈໍານວນ 2.1 ຕື້ໂດລາ ແມ່ນນ້ອຍກວ່າການຄ້າຂາຍດ້ານຜະລິດຕະພັນທີ່ເປັນວັດຖຸ. ໃນປີ 2019 ການຄ້າດ້ານການບໍລິການແມ່ນໄດ້ເພີ້ມຂຶ້ນ 18% 0.9 ຕື້ໂດລາ. ສ່ວນການນໍາເຂົ້າດ້ານການບໍລິການໄດ້ເພີ້ມຂຶ້ນ 3.4% 1.2 ຕື້ໂດລາ. ເຮັດໃຫ້ມີຂາດດູນການຄ້າ 232.7 ລ້ານໂດລາ.[13] ການບໍລິການເດີນທາງແມ່ນ 80% ຂອງການຄ້າດ້ານການບໍລິການຂາເຂົ້າ-ຂາອອກ ລວມກັບການບໍລິການຂົນສົ່ງ.

---

[12]International Trade Centre, Trade Map: https://www.trademap.org/Product_SelCountry_TS.aspx?nvpm=1%7c418%7c%7c%7c%7c85%7c%7c%7c4%7c1%7c1%7c2%7c2%7c1%7c1%7c1%7c1%7c1%7c1 as of August 27th 2020.

[13]United Nations (Ed.): 2019 International Trade Statistics Yearbook, op.cit., p. 204.

## 2.1.5. ຈຸນລະວິສະຫະກິດ, ວິສາຫະກິດຂະໜາດນ້ອຍ ຂະໜາດກາງ

ຈຸນລະວິສາຫະກິດ ແລະ SME ຫຼືວ່າວິສາຫະກິດທີ່ມີແຮງງານຕ່ຳກວ່າ 100 ຄົນ ກວມເອົາ 99% ຂອງຈຳນວນທຸລະກິດທັງໝົດທີ່ຈົດທະບຽນໃນ ສປປ ລາວ ໃນນັ້ນມີ 85% ຂອງວິສາຫະກິດຢູ່ໃນຂົງເຂດທີ່ບໍ່ແມ່ນກະສິກຳ. ເຖິງຢ່າງໃດກໍ່ຕາມ SME ແມ່ນປະກອບພຽງແຕ່ 20% ຂອງ GDP.[14] ວິສາຫະກິດຂະໜາດນ້ອຍ ຂະໜາດກາງໄດ້ຖືເປັນກະດູກສັນຫຼັງຂອງເສດຖະກິດລາວ ແຕ່ໃນປັດຈຸບັນ ກະດູກສັນຫຼັງດັ່ງກ່າວ ແມ່ນຍັງອ່ອນແອທີ່ຕ້ອງການການເສີມສ້າງຄວາມເຂັ້ມແຂງໂດຍພື້ນຖານ ຍ້ອນຂະແໜງການ SME ແມ່ນນຳໃຊ້ແຮງງານຈຳນວນຫຼວງຫຼາຍ.

ຢູ່ ສປປ ລາວ ທຸລະກິດຂະໜາດນ້ອຍຂະໜາດກາງແມ່ນມີຈຳນວນແຮງງານ 2 ຄົນ ໂດຍສະເລ່ຍ. ການສຳຫຼວດສະພາບເສດຖະກິດລາວໃນປີ 2013 ໄດ້ຢັ້ງຢືນວ່າ 86% ຂອງວິສາຫະກິດລາວແມ່ນມີແຮງງານຕ່ຳກວ່າ 5 ຄົນ ແລະ 60% ວິສາຫະກິດລາວມີລາຍຮັບຕ່ຳກວ່າ 5 ລ້ານກີບ (ຫຼື ປະມານ 623 ໂດລາ) ຕໍ່ເດືອນ ມີພຽງແຕ່ 10% ຂອງວິສາຫະກິດລາວທີ່ມີລາຍຮັບ 25 ລ້ານກີບ (3,218 ໂດລາ) ຕໍ່ເດືອນ.[15]

ຈະຕ້ອງໄດ້ຮັບຮູ້ວ່າ ຕາມການລາຍງານຂອງທະນາຄານໂລກ ວິສາຫະກິດທີ່ເຄື່ອນໄຫວນອກລະບົບ ແລະ ບໍ່ໄດ້ຈົດທະບຽນເປັນທາງການແມ່ນມີປະມານ 78.5 ເປີເຊັນ ຂອງຈຳນວນວິສາຫະກິດຕົວຈິງ ທີ່ບໍ່ນອນຢູ່ໃນພາກສ່ວນທີ່ນຳໃຊ້ແຮງງານກະສິກຳ. ໃນນີ້ການເຮັດວຽກຂອງແຮງງານນອກລະບົບໃນວິສາຫະກິດດັ່ງກ່າວ ແລະ ໃນຄົວເຮືອນແມ່ນ 94 ເປີເຊັນຂອງຈຳນວນແຮງງານ.[16] ຜະລິດຕະພາບຂອງງານ ແລະ ຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດ ແລະ ແຮງງານນອກລະບົບແມ່ນຕ່ຳຫຼາຍຖ້າທຽບໃສ່ພາກສ່ວນທີ່ເຄື່ອນໄຫວໃນລະບົບ.[17]

ນອກຈາກມີສະພາບແວດລ້ອມທີ່ບໍ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ, ວິສາຫະກິດຂະໜາດນ້ອຍ ຂະໜາດກາງ ຍັງປະສົບກັບບັນຫາຫຼາຍຢ່າງ.

ວິສາຫະກິດຂະໜາດນ້ອຍ ຂະໜາດກາງ ແມ່ນຂາດເງິນທຶນຮອນ ແລະ ມີທຶນໝູນວຽນຈຳນວນໜ້ອຍ ຈຶ່ງເຮັດໃຫ້ທຸລະກິດເຂົາເຈົ້າມີຄວາມສ່ຽງສູງ. ເຂົາເຈົ້າກໍມີຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງທຶນ ໂດຍສະເພາະແມ່ນເງິນກູ້ຈາກທະນາຄານ. ໃນປີ 2018 ມີພຽງແຕ່ 8.6% ຂອງວິສາຫະກິດລາວ ທີ່ໄດ້ນຳໃຊ້ເງິນກູ້ຈາກທະນາຄານເພື່ອລົງທຶນໃນທຸລະກິດຂອງຕົນ. ເປັນເປີເຊັນທີ່ນ້ອຍທີ່ສຸດຖ້າສົມທຽບໃສ່ປະເທດໃນກຸ່ມອາຊຽນ ລວມທັງ ກຳປູເຈຍ ແລະ ມຽນມາ.[18] ອຸປະສັກໃນການກູ້ຢືມເງິນຈາກທະນາຄານແມ່ນອັດຕາດອກເບ້ຍທີ່ສູງ ແລະ ການຈັດຕັ້ງປະຕິບັດບັນດາຂັ້ນຕອນເພື່ອຂໍເງິນກູ້ທີ່ຫຍຸ້ງຍາກສັບສົນ ແລະ ມີຄ່າໃຊ້ຈ່າຍສູງ.[19]

---

[14]World Bank Group: Maintaining Economic Stability. Lao Economic Monitor, August 2019, Vientiane, p. 11.
[15] Bruesseler, R.: Lao PDR. Charts and Figures. Vientiane, July 2019, p. 98 and 103. https://eccil.org/euro-lao-business/lao-economy/lao-pdr-charts-and-figures-july-2019/ as of April 20th 2020.
[16]World Bank Group: Maintaining Economic Stability. Op. cit., p. 48.
[17]Ibid.
[18]World Bank: https://data.worldbank.org/indicator/IC.FRM.BNKS.ZS?view=chart as of April 17th 2020.
[19]World Bank Group: Maintaining Economic Stability. Op. cit., p. 44.

ບັນຫາອີກອັນໜຶ່ງທີ່ SME ໄດ້ປະເຊີນໜ້າຢູ່ແມ່ນ ການແຂ່ງຂັນກັບພາກສ່ວນທີ່ເຄື່ອນໄຫວທຸລະກິດນອກລະບົບທີ່ມີເງື່ອນໄຂໃນການຫຼີກລ້ຽງການຈ່າຍຄ່າພາສີອາກອນ ແລະ ການປະຕິບັດລະບຽບການດ້ານທຸລະກິດຕ່າງໆ.

ວິສາຫະກິດຂະໜາດນ້ອຍ ຂະໜາດກາງ ແມ່ນບໍ່ໄດ້ນຳໃຊ້ເຕັກໂນໂລຢີ ພ້ອມທັງໄດ້ນຳໃຊ້ແຮງງານທີ່ບໍ່ມີທັກສະ. ເຮັດໃຫ້ຜະລິດຕະພາບຂອງທຸລະກິດຕ່ຳ ແລະ ບໍ່ມີທ່າຂະຫຍາຍຕົວ ເຮັດໃຫ້ບໍ່ສາມາດຂະຫຍາຍທຸລະກິດຂະໜາດໃຫ່ຍທີ່ສະໜອງປະລິມານຈຳນວນໃຫ້ແກ່ເສດຖະກິດຂະໜາດໃຫ່ຍໄດ້. ນອກນັ້ນ ກໍ່ຍັງມີຂໍ້ຈຳກັດໃນການເຂົ້າເຖິງການບໍລິການດ້ານການພັດທະນາທຸລະກິດ ແລະ ຕະຫຼາດອັນໃໝ່.

ເພື່ອສາມາດເສີມສ້າງຄວາມເຂັ້ມແຂງໃຫ້ທຸລະກິດວິສາຫະກິດຂະໜາດນ້ອຍ ຂະໜາດກາງ ມັນມີຄວາມຈຳເປັນທີ່ຈະຍົກຄວາມສາມາດດ້ານການເງິນ ລວມທັງຄວາມຮູ້ ຄວາມສາມາດ ໃນການຄຸ້ມຄອງບໍລິຫານ, ວາງແຜນທຸລະກິດໂດຍການປັບປຸງການບໍລິການໃຫ້ວິສາຫະກິດເຂົ້າເຖິງແຫຼ່ງທຶນ, ການບໍລິການພັດທະນາດ້ານທຸລະກິດ ແລະ ການຕະຫຼາດ.

## 2.2 ຜົນກະທົບຈາກ COVID-19

ໃນໄລຍະທີ່ກະກຽມຮ່າງຍຸດທະສາດສະບັບນີ້ໃນປີ 2020 ໂລກກໍ່ໄດ້ປະເຊີນໜ້າກັບການລະບາດຂອງພະຍາດ COVID-19 ການລະບາດຂອງພະຍາດນີ້ກໍ່ໄດ້ກະທົບເຖິງສະພາບຊີວິດການເປັນຢູ່ ແລະ ເສດຖະກິດຂອງ ສປປ ລາວ.

ຜົນກະທົບຂອງການລະບາດຂອງພະຍາດນີ້ ແມ່ນບໍ່ສາມາດຄຳນຶງເຖິງໄດ້ ແລະ ມີຄວາມບໍ່ແນ່ນອນ. ຂະແໜງການເສດຖະກິດໄດ້ຖືກກະທົບຢ່າງໜັກໜ່ວງແມ່ນ ຂະແໜງການບໍລິການເດີນທາງ, ບໍລິການທ່ອງທ່ຽວ, ພັກແຮມ, ອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ແລະ ການຄ້າ; ນອກນັ້ນຍັງມີການກະທົບເຖິງຄວາມຕ້ອງການການບໍລິໂພກພາຍນອກ ແລະ ການຢຸດສະຫງັກຂອງຕ່ອງໂສ້ການຜະລິດ ແລະ ການຈໍລະຈອນສິນຄ້າ.

ດ້ວຍເຫດນີ້ສະພາບການຂະຫຍາຍຕົວທາງດ້ານເສດຖະກິດແມ່ນມີການຫຼຸດລົງ. ສະຖາບັນເສດຖະກິດແຫ່ງຊາດໄດ້ຄາດຄະເນໃນເດືອນ ມີນາ 2020 ວ່າເສດຖະກິດຂອງລາວຍັງຈະຂະຫຍາຍຕົວໃນອັນດັບ 6%, ຖ້າທຽບໃສ່ແຜນກາງທີ່ວາງໄວ້ກ່ອນສະພາບການ COVID 6.7%.[20]

ໃນເດືອນ 6 ປີ 2020 ນາຍົກລັດຖະມົນຕີໄດ້ແຈ້ງຕໍ່ສະພາແຫ່ງຊາດວ່າ GDP ຂອງ ສປປ ລາວ ຈະຂະຫຍາຍຕົວໃນລະດັບ 3.3 ຫຼື 3.6% ໃນປີ 2020.[21] ແຕ່ຕົວເລກນີ້ຍັງຖືໃນແງ່ດີ ເພາະໃນໄລຍະດຽວກັນທະນາຄານໂລກໄດ້

[20]Kang, T.: Coronavirus Outbreak Affects Lao Tourism, Investment and Trade. The Laotian Times, March 04th 2020. https://laotiantimes.com/2020/03/04/coronavirus-outbreak-affects-lao-tourism-investment-and-trade/ as of March 31st 2020.

[21]Gov't proposes lowering growth target. KPL, http://kpl.gov.la/En/Detail.aspx?id=53026 as of June 26th 2020.

ຄາດຄະເນການຂະຫຍາຍຕົວຂອງ GDP ໃນ ສປປ ລາວ ມີພຽງແຕ່ 1%[22] ແລະ ທະນາຄານພັດທະນາອາຊີຍິ່ງຫຼຸດຕົວເລກດັ່ງກ່າວເປັນ -0.5%.[23]

ໃນໄລຍະທີ່ມີວິກິດການເນື່ອງຈາກ COVID-19 ລັດຖະບານຍັງປະເຊີນໜ້າກັບສະພາບງົບປະມານທີ່ອ່ອນແອ – ເນື່ອງມາຈາກຈຳນວນໜີ້ສິນຂອງລັດແມ່ນເຖິງ 60% ຂອງ GDP, ການຂາດດຸນງົບປະມານຢູ່ໃນອັນດັບ - 4.9% ແລະ ຄັງສຳຮອງທີ່ຢູ່ໃນລະດັບຕ່ຳ ແລະ ການຂະຫຍາຍຕົວຂອງສະພາບເງິນເຟີ້ແມ່ນໄດ້ກະທົບເຖິງການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຄວາມສາມາດໃນການ ການຊຳລະສະສາງໜີ້ສິນຂອງລັດໃນປີ 2020.[24]

ທຸລະກິດຂະໜາດນ້ອຍ ຂະໜາດກາງ ທີ່ກວມເອົາຈຳນວນຫຼວງຫຼາຍໃນຂະແໜງທຸລະກິດເປັນພາກສ່ວນທີ່ຖືກກະທົບຫຼາຍກວ່າໝູ່ – ເນື່ອງຈາກມີທຶນໜ້ອຍ, ເງິນໝູນວຽນຈຳກັດ ແລະ ຄວາມຈຳກັດໃນການເຂົ້າເຖິງແຫຼ່ງທຶນ ເຮັດໃຫ້ມີຄວາມສ່ຽງໃນການລົ້ມລະລາຍຂອງວິສາຫະກິດ SME ດັ່ງກ່າວໄດ້ເພີ້ມຂຶ້ນ.

ຂະແໜງເສດຖະກິດໂດຍສະເພາະແມ່ນຂະແໜງການບໍລິການພັກແຮມ ແລະ ຂະແໜງການບໍລິການຂາຍຍ່ອຍ ແລະ ກໍ່ສ້າງ ແມ່ນໄດ້ຖືກກະທົບຢ່າງໜັກໜ່ວງ. ມີການຄາດຄະເນວ່າ ຜົນເສຍຫາຍໃນອຸດສາຫະກຳການບໍລິການລວມການບໍລິການທ່ອງທ່ຽວຈະຢູ່ໃນລະດັບ 250 – 300 ລ້ານໂດລາ.[25]

ໃນໄລຍະປັດຈຸບັນຍັງບໍ່ສາມາດປະເມີນຜົນການກະທົບຕໍ່ການລົງທຶນຈາກຕ່າງປະເທດ (FDI) ທີ່ໃນໄລຍະປີ 2019, 60% ຂອງການລົງທຶນແມ່ນມາຈາກ ສປ ຈີນ[26] ມີການຄາດຄະເນວ່າການລົງທຶນຕ່າງປະເທດຈະມີການສະລໍຕົວລົງ ເນື່ອງຈາກການຂະຫຍາຍຕົວຂອງເສດຖະກິດທີ່ຊັກຊ້າລົງໃນປະເທດທີ່ລົງທຶນລາຍໃຫ່ຍ ໂດຍສະເພາະຈາກ ສປ ຈີນ.[27]

ການສົ່ງເງິນກັບຄືນປະເທດຂອງແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ໄດ້ເພີ້ມຂຶ້ນຫຼາຍໃນໄລຍະຊຸມປີທີ່ຜ່ານມາ ແລະ ໄດ້ເຖິງ 284 ລ້ານໂດລາໃນປີ 2019,[28] ລາຍຮັບດັ່ງກ່າວຈະຫຼຸດລົງຍ້ອນການກັບຄືນປະເທດຂອງແຮງງານລາວຈາກປະເທດໄທ ແລະ ປະເທດອື່ນໆ. ສົມທົບກັບສະພາບແວດລ້ອມທຸລະກິດທີ່ກະທົບບັນດາທຸລະກິດຂະໜາດນ້ອຍ ຂະໜາດກາງນັ້ນ ແລະ ລາຍຮັບຈາກການສົ່ງເງິນມາແຕ່ຕ່າງປະເທດຈະມີຫຼາຍຄອບຄົວທີ່ຈະຂາດລາຍໄດ້ ແລະ ຫຼົ້ມຈົມສູ່ຄວາມທຸກຍາກ, ສະພາບດັ່ງກ່າວຍັງຈະໄປກະທົບຕະຫຼາດການອຸປະໂພກບໍລິໂພກພາຍໃນ ແລະ ນຳໄປເຖິງການປິດກິດຈະການທຸລະກິດເພີ້ມເຕີມ ເຮັດໃຫ້ຜົນກະທົບດ້ານເສດຖະກິດໜັກໜ່ວງຂຶ້ນຕື່ມ ແລະ ຍາວນານ. ໃນນີ້ແຮງງານນອກລະບົບທີ່ເຮັດວຽກພາຍໃນປະເທດ ແລະ ແຮງງານທີ່ຫາເຊົ້າກິນຄ່ຳທີ່ປະກອບເປັນພື້ນຖານຂອງການຜະລິດກະສິກຳໃນຊົນນະບົດທີ່ມີຄວາມສ່ຽງຫຼາຍກວ່າໝູ່ ແຕ່ເປັນກຸ່ມຄົນທີ່ເຂົ້າເຖິງການຊ່ວຍເຫຼືອ

---

[22]World Bank: Global Economic Prospects. Washington, June 2020, p. 74.
[23]Asian Development Bank: Asian Development Outlook. Supplement June 2020. Manila 2020, p.8.
[24]The World Bank quantifies Laos' debt obligation for 2020 at 1bln USD. World Bank: East Asia and Pacific in the Time of COVID-19. East Asia and Pacific Economic Update, April 2020., p. 175 f.
[25]Cho, S. (Ed.): Monthly ROK-LPDR Bilateral News. Embassy of the Republic of Korea. February 2020, p. 3.
[26]Own calculations based on figure from Ministry of Industry and Commerce published on http://erm.gov.la/index.php/en/explore-data-en/statistics as of March 31st 2020.
[27]Menon, J.: Assessing the economic impacts of COVID-19 on ASEANcountries. East Asia Forum, March 27th 2020, p. 1.
[28]World Bank: https://data.worldbank.org/indicator/BX.TRF.PWKR.CD.DT?locations=LA as of August 27th 2020.

ຍາກກວ່າໝູ່. ເຖິງຢ່າງໃດກໍ່ຕາມ ເນື່ອງຈາກການຜະລິດກະສິກຳໃນປະເທດຍັງເປັນການຜະລິດເພື່ອກຸ້ມຕົນເອງ ໂດຍທົ່ວໄປແມ່ນຄຸ້ມກັນໃຫ້ສະພາບການກະທົບດ້ານເສດຖະກິດບໍ່ໄດ້ຖືກກະທົບຢ່າງໜັກໜ່ວງປານໃດ.

### 2.2.1 ຜົນການສຳຫຼວດຜົນກະທົບຂອງ COVID-19 ຕໍ່ທຸລະກິດ ຂອງ ສຄອຊ

ໃນເດືອນພຶດສະພາ ປີ 2020 ສຄອຊ ໄດ້ເຜີຍແຜ່ຜົນການສຳຫຼວດຜົນກະທົບຈາກວິກິດການ COVID-19 ຕໍ່ທຸລະກິດທີ່ໄດ້ປະຕິບັດໃນໄລຍະເດືອນມີນາ - ເມສາ 2020 ລວມມີ 474 ວິສາຫະກິດທີ່ຮ່ວມການສຳຫຼວດ. ບົດສຳຫຼວດໄດ້ໃຫ້ເຫັນຜົນກະທົບທີ່ຮ້າຍແຮງຕໍ່ທຸລະກິດ.[29]

36% ຂອງຜູ້ໃຫ້ສຳພາດຈະມີຄວາມຈຳເປັນຢຸດຕິທຸລະກິດຂອງຕົນ 100%, ມີ 14% ຈະຢຸດຕິທຸລະກິດ 80%, ຄວາມສ່ຽງໃນການປິດທຸລະກິດໄດ້ສະແດງອອກໃນຂະແໜງຂົນສົ່ງ ໂລຈິສຕິກ, ບໍລິການພັກແຮມ, ບໍລິການຮ້ານອາຫານ ລວມທັງບໍລິການບັນເທີງ, ສິລະປະ ແລະ ການພັກຜ່ອນຢ່ອນໃຈ.[30]

*ຮູບພາບ 5: ຄວາມສ່ຽງໃນການປິດກິດຈະການທຸລະກິດໃນແຕ່ລະຂະແໜງການ*




ແຫຼ່ງທີ່ມາຂອງຂໍ້ມູນ: ສຄອຊ: ບົດລາຍງານການສຳຫຼວດຜົນກະທົບຈາກ COVID-19 ຕໍ່ທຸລະກິດ, ວຽງຈັນ 2020, p.7.

[29]Lao National Chamber of Commerce and Industry: Survey report in impact of COVID 19 on businesses. Vientiane 2020.
[30]Ibid, p. 7.

ອຸປະສັກໃຫ່ຍໃນການດໍາເນີນທຸລະກິດຕໍ່ແມ່ນການຈ່າຍແຮງງານເງິນເດືອນ ແລະ ຈ່າຍຄືນເງິນກູ້ ແລະ ດອກເບ້ຍ. ດັ່ງນັ້ນມີ 70% ຂອງຜູ້ສໍາພາດເຫັນວ່າຈະຕ້ອງຢຸດຕິການວ່າຈ້າງແຮງງານທັງໝົດ ແລະ ມີ 40 % ທີ່ຈະຢຸດຕິການວ່າຈ້າງງານ 50%; ສະພາບການຢຸດຕິການວ່າຈ້າງແຮງງານແມ່ນຢູ່ໃນຂະແໜງການບໍລິການພັກແຮມ ແລະ ຮ້ານອາຫານ.

*ຮູບພາບ 6: ເປີເຊັນຂອງຜູ້ປະກອບການທຸລະກິດທີ່ຢຸດຕິການຈ້າງງານ*




ແຫຼ່ງທີ່ມາຂອງຂໍ້ມູນ: ສຄອຊ: ບົດລາຍງານການສໍາຫຼວດຜົນກະທົບຈາກ COVID-19 ຕໍ່ທຸລະກິດ, ວຽງຈັນ 2020, p. 9.

ໃນການສໍາຫຼວດນັ້ນ ຂະແໜງການເງິນທະນາຄານແມ່ນໄດ້ສະແດງວ່າ ມີຜົນກະທົບພຽງເລັກນ້ອຍຕໍ່ວິກິດການນີ້. ອາດຈະແມ່ນວ່າ ການກູ້ຢືມຈາກທຸລະກິດແມ່ນບໍ່ຜ່ານສະຖາບັນການເງິນໂດຍສ່ວນໃຫ່ຍ ແລະ ຍ້ອນວ່າຜົນກະທົບຍັງຢູ່ໄລຍະເບື້ອງຕົ້ນ ບັນດາສະຖາບັນການເງິນຍັງບໍ່ທັນໄດ້ຮັບຜົນກະທົບຈາກການບໍ່ສາມາດຈ່າຍເງິນທຶນ ພ້ອມດອກເບ້ຍຄືນ ແລະ ຍັງບໍ່ຮູ້ວ່າຈະມີໜີ້ທີ່ບໍ່ສາມາດຊໍາລະໄດ້ຄືແນວໃດ.

ໂດຍການຄິດໄລ່ແບບງ່າຍດາຍ, ຍົກຕົວຢ່າງ ໂດຍບໍ່ຄໍານຶງເຖິງການປ່ຽນແປງຕາມລະດູການ, ສຄອຊ ໄດ້ຄາດຄະເນວ່າ ໃນໄຕມາດທີ 1 ຂອງປີ 2020 ລາຍຮັບລວມຂອງຂະແໜງທຸລະກິດທັງໝົດແມ່ນ 1.8 ຕື້ໂດລາ ທີ່ຫຼຸດລົງຖ້າທຽບໃສ່ໄຕມາດທີ 1 ຂອງປີ 2019 ທີ່ຢູ່ໃນລະດັບ 6% ຂອງ GDP ຂອງ ສປປ ລາວ. ຫຼາຍກວ່າ 1/4 ຂອງຜູ້ປະກອບການທີ່ຖືກສໍາພາດໄດ້ແຈ້ງວ່າ ໄດ້ເສຍລາຍຮັບຫຼາຍກວ່າ 80% ໃນໄຕມາດ 1 ປີ 2020 ຖ້າທຽບໃສ່ໄລຍະດຽວກັນໃນຊຸມປີທີ່ຜ່ານມາ.

ນອກຈາກມາດຕະການກະຕຸ້ນເສດຖະກິດຂອງລັດຖະບານທີ່ໄດ້ວາງອອກ ແລະ ການປັບປຸງງົບປະມານຂອງລັດ, ສຄອຊ ຍັງເຫັນຄວາມຈຳເປັນທີ່ຈະໄດ້ຈັດຕັ້ງມາດຕະການກະຕຸ້ນຕ່າງໆຜ່ານໂຄງການນຳລ່ອງ ແລະ ໄດ້ຫຼຸດຜ່ອນຜົນກະທົບດ້ານເສດຖະກິດຈາກການລະບາດຂອງ COVID-19 ເພື່ອຫຼີກລ້ຽງວິກິດການດ້ານເສດຖະກິດທີ່ຮ້າຍແຮງ.

## 2.3 ແວດລ້ອມຍຸດທະສາດຂອງ ສຄອຊ

### 2.3.1 ບົດບາດ, ໜ້າທີ່ ແລະ ວຽກງານຫຼັກຂອງ ສຄອຊ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ສຄອຊ) ໄດ້ຖືກຈັດຕັ້ງຂຶ້ນໃນປີ 1989 ແລະ ເຄື່ອນໄຫວຕາມດຳລັດສະບັບເລກທີ 237/ນຍ ລົງວັນທີ 18 ພຶດສະພາ 2020 ຂອງນາຍົກລັດຖະມົນຕີ. ສຄອຊ ເປັນອົງການຈັດຕັ້ງສັງຄົມຕາງໜ້າໃຫ້ແກ່ຜູ້ປະກອບການທຸລະກິດ ໄດ້ມີການຄື່ອນໄຫວຕາມພະລາກິດ ແລະ ງົບປະມານຂອງຕົນເອງ. ເປັນຂົວຕໍ່ລະວ່າງພາກທຸລະກິດ ແລະ ລັດຖະບານ ລວມທັງເປັນຜູ້ຕາງໜ້າໃຫ້ຜູ້ປະກອບການ, ສະມາຄົມ ແລະ ກຸ່ມທຸລະກິດ. ພ້ອມກັນນັ້ນຍັງໄດ້ນຳພາ ສະພາການຄ້າ ແລະ ອຸດສາຫະກຳໃນ 17 ແຂວງ ແລະ ສະພາການຄ້າ ແລະ ອຸດຫະກຳນະຄອນຫຼວງ.
ໃນປັດຈຸບັນ ສຄອຊ ມີສະມາຊິກຫຼາຍກ່ວາ 1000 ຫົວໜ່ວຍ. ສຄອຊ ຍັງມີໜ້າທີ່ຄຸ້ມຄອງກວດກາຕິດຕາມການຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດຢູ່ ສປປ ລາວ, ກຸ່ມທຸລະກິດຕ່າງປະເທດ, ສະມາຄົມ ແລະ ກຸ່ມທຸລະກິດພາຍໃນປະເທດອີກດ້ວຍ. ສຄອຊ ຍັງເປັນອົງການຜູ້ຕາງໜ້າຜູ້ໃຊ້ແຮງງານແຫ່ງຊາດ. ພາລະບົດບາດ ແລະ ໜ້າທີ່ວຽກງານທີ່ໄດ້ກ່າວມານັ້ນໄດ້ຢັ້ງຢືນວ່າ ສຄອຊ ເປັນອົງການຈັດຕັ້ງຂອງພາກທຸລະກິດທີ່ສູງສຸດໃນ ສປປ ລາວ.

ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ່ 237/ນຍ ໄດ້ມອບໝາຍໜ້າທີ່ວຽກງານດັ່ງລຸ່ມນີ້ໃຫ້ແກ່ສຄອຊ:

- ເປັນຜູ້ຕາງໜ້າຜູ້ໃຊ້ແຮງງານ, ສະມາຄົມທຸລະກິດ, ກຸ່ມທຸລະກິດ, ສະຫະກອນ, ຜູ້ປະກອບການເອກກະລາດ ແລະ ວິສາຫະກິດທົ່ວໄປ ເພື່ອພັດທະນາສົ່ງເສີມເສດຖະກິດ ແລະ ປົກປ້ອງສິດຜົນປະໂຫຍດຂອງວິສາຫະກິດ;
- ນຳພາ ແລະ ສະໜອງຂໍ້ມູນໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງທຸລະກິດໃໝ່ ແລະ ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ທຸລະກິດທີ່ເປັນສະມາຊິກຂອງຕົນ;
- ເປັນກອງເລຂາຂອງສະມາຄົມທຸລະກິດລາວ (LBF) ແລະ ປະກອບຄຳເຫັນ, ປຶກສາຫາລື ແລະ ໃຫ້ຄຳແນະນຳໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຖະບານ ວ່າດ້ວຍການພັດທະນາ ຫຼື ການປັບປຸງລະບຽບກົດໝາຍ ເພື່ອສ້າງແວດລ້ອມການດຳເນີນທຸລະກິດໃຫ້ດີຂຶ້ນ;
- ການສ້າງຕັ້ງ, ສ້າງຄວາມສາມາດ ແລະ ນຳພາການຈັດຕັ້ງ ແລະ ເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຂວງ; ນະຄອນຫຼວງ ແລະ ເມືອງ ເພື່ອຮັບປະກັນໃຫ້ມີການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນຢ່າງເອກະພາບ ແລະ ມີປະສິດທິຜົນ;

- ສົ່ງເສີມການພົວພັນວ່າດ້ວຍແຮງງານທີ່ດີ ແລະ ເຂົ້າຮ່ວມການສົນທະນາ ແລະ ການເຈລະຈາວ່າດ້ວຍການຄ້າ, ການລົງທຶນ ແລະ ບັນຫາກ່ຽວກັບແຮງງານເຊັ່ນ: ເງິນເດືອນ/ແຮງງານຕໍ່າສຸດ ແລະ ອື່ນໆ ທີ່ປະກົດໃນປະເທດ ຫຼື ຢູ່ຕ່າງປະເທດ ເພື່ອອປົກປ້ອງສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງບັນດາຜູ້ປະກອບການທຸລະກິດ ແລະ ຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງຕົນ;
- ເກັບກຳ ແລະ ສັງລວມຂໍ້ມູນກ່ຽວກັບວິສາຫະກິດ ແລະ ການຕະຫຼາດເປັນປະຈຳ;
- ຈັດຕັ້ງ ແລະ ລະດົມຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງຕົນ ໃຫ້ເຂົ້າຮ່ວມການພົບປະທຸລະກິດ, ງານວາງສະແດງ, ງານຕະຫຼາດນັດ, ການໄປທັດສະນະທຸລະກິດພາຍໃນປະເທດ ແລະ ຢູ່ຕ່າງປະເທດ;
- ຈັດຕັ້ງມາດຕະການຕ່າງໆ ທີ່ເໝາະສົມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍໃຫ້ແກ່ສະມາຊິກຂອງຕົນໂດຍອີງໃສ່ບັນດານິຕິກຳ ແລະ ລະບຽບກົດໝາຍທີ່ມີຢູ່;
- ຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
- ຮັບເອົາການຊ່ວຍເຫຼືອລ້າ ການສະໜຸນຈາກລັດຖະບານ, ບຸກຄົນ ແລະ ນິຕິບຸກຄົນ ທີ່ຢູ່ໃນປະເທດ ແລະຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
- ສ້າງຕັ້ງ ແລະ ພັດທະນາສູນບໍລິການທຸລະກິດຂະໜາດນ້ອຍ ຂະໜາດກາງ, ຫ້ອງການສົ່ງເສີມການຕະຫຼາດຂອງຜະລິດຕະພັນຍີ່ຫໍ້ລາວ (Made in Laos) ໃນ ສປປ ລາວ. ພ້ອມທັງຈັດຕັ້ງການຝຶກອົບຮົມ ແບບມີສ່ວນຮ່ວມດ້ວຍຮູບການ ການຮ່ວມມືລັດ-ທຸລະກິດ ໂດຍການເຫັນດີຈາກລັດຖະບານ;
- ກວດກາຕິດຕາມ, ປະເມີນຜົນການເຄື່ອນໄຫວທຸລະກິດ ແລະ ຢັ້ງຢືນຖານະຂອງທຸກໆວິສາຫະກິດທີ່ມີຈຸດປະສົງ ເຂົ້າໃນການປະມູນຂອງໂຄງການລັດຖະບານ ທີ່ນຳໃຊ້ງົບປະມານແຫ່ງລັດຕາມຄວາມຮຽກຮ້ອງຕ້ອງການຂອງລັດຖະບານ;
- ສະເໜີ ຫຼື ຮຽກຮ້ອງໃຫ້ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງໃຫ້ທົບທວນຄືນການປະມູນໂຄງການຂອງລັດຖະບານທີ່ເຫັນວ່າບໍ່ໂປ່ງໃສ, ທີ່ມີການແຂ່ງຂັນແບບບໍ່ຊອບທຳ ເພື່ອປ້ອງກັນສິດຜົນປະໂຫຍດຖືກຕ້ອງຕາມກົດໝາຍຂອງຫົວໜ່ວຍທຸລະກິດ;
- ໃຫ້ການຍ້ອງຍໍ ຫຼື ສະເໜີລັດຖະບານ ແລະ ອົງການຈັດຕັ້ງສາກົນການຍ້ອງຍໍທຸລະກິດທີ່ມີຜົນສຳເລັດທີ່ດີ.

ເພື່ອສະໜອງກັບໜ້າທີ່ວຽກງານ ທີ່ລະບຸໄວ້ໃນດຳລັດເລກທີ່ 237/ນຍ ແລະ ດຳລັດເລກທີ່ 316/ນຍ ທີ່ເປັນດຳລັດທີ່ໄດ້ຄອບຄອງການເຄື່ອນໄຫວຂອງ ສຄອຊ ກ່ອນໜ້ານີ້, ສຄອຊ ໄດ້ຈັດຕັ້ງວຽກງານ ແລະ ໄດ້ກຳນົດບັນດາກິດຈະກຳຕົ້ນຕໍດັ່ງຕໍ່ໄປນີ້:

